ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ພຶດສະພາ 2024
ປີທີ 13
ສະບັບທີ 970
ລາຍສັບປະດາ

## ມອບ-ຮັບ ໜ້າທີ່ເລຂາທິການສະພາແຫ່ງຊາດ




(ສພຊ) - ວັນອັງຄານທີ 07 ພຶດສະພາ 2024 ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບໜ້າທີ່ລະຫວ່າງທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ເລຂາທິການສະພາແຫ່ງຊາດ ຜູ້ເກົ່າ ແລະ ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດຜູ້ໃໝ່ ໂດຍການເຂົ້າຮ່ວມເປັນປະທານຂອງທ່ານປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳ ຜູ້ຊີ້ນຳວຽກງານຄະ

ອ່ານຕໍ່ໜ້າ 8

## ທາບທາມກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ ຢູ່ຂັ້ນສູນກາງ



(ສພຊ) - ເພື່ອເປັນການລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດຈາກບັນດາການນຳຂັ້ນຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງໃນການປັບປຸງກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ (ສພຊ) ໃຫ້ຄົບຖ້ວນ, ຮັດກຸມ ແລະ ແທດເໝາະກັບສະພາບຕົວຈິງ ກ່ອນທີ່ຈະນຳໄປພິ ຈາລະນາ, ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ໃນຕໍ່ໜ້ານີ້, ໃນວັນທີ 08-09 ພຶດສະພາ 2024 ຄະນະຮັບຜິດຊອບປັບປຸງຮ່າງກົດໝາຍສະພາແຫ່ງຊາດ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ 3 ສະບັບຄື: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນ

ອ່ານຕໍ່ໜ້າ 8

## ກະກຽມຄວາມພ້ອມການເປັນເຈົ້າພາບ ແລະ ຜ່ານແບບໂລໂກກອງປະຊຸມໃຫຍ່ ໄອປາ-45



(ສພຊ) - ຕອນບ່າຍຂອງວັນທີ 13 ພຶດສະພາ 2024 ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມປຶກສາຫາລື ແລະ ກະກຽມຄວາມພ້ອມດ້ານຕ່າງໆ ເພື່ອຮັບໃຊ້ໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (ASEAN Inter-Parliamentary Assembly - AIPA) ຄັ້ງທີ 45 ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ຫົວໜ້າອະນຸກຳມະການກອງເລຂາແຫ່ງຊາດໄອປາ-45; ເຊິ່ງຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານກ່ຽວກັບກົງຈັກການຈັດຕັ້ງ ແລະ ກົນໄກການດຳເນີນກອງປະຊຸມຕ່າງໆຂອງໄອປາ, ປະ

ອ່ານຕໍ່ໜ້າ 8

## ປະທານກຳມາທິການວັດທະນະທຳ-ສັງຄົມ ຕ້ອນຮັບທູດຍີ່ປຸ່ນເຂົ້າຢ້ຽມອຳລາ



ອ່ານຕໍ່ໜ້າ 4

## ເອກອັກຄະລັດຖະທູດອາເມລິກາຢ້ຽມຂໍ່ານັບ ປະທານກຳມາທິການການຕ່າງປະເທດ



(ສພຊ) - ວັນທີ 10 ພຶດສະພາ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ Healther Roach Variava ໃນໂອກາດທີ່ມາດຳລົງຕຳແໜ່ງເປັນເອກອັກຄະລັດຖະທູດ ແຫ່ງ ສະຫະລັດອາເມລິກາ ປະຈຳ ສປປລາວ ຄົບໃໝ່.

ອ່ານຕໍ່ໜ້າ 4

## ຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳທີ່ຕິດພັນກັບການຄ້າຊາຍແດນ

(ສພຊ) - ລະຫວ່າງວັນທີ 05-09 ພຶດສະພາ 2024 ທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳທີ່ຕິດພັນກັບການນຳເຂົ້າ, ປຸງແຕ່ງນ້ຳມັນເຊື້ອໄຟ ເພື່ອສະໜອງການຊົມໃຊ້ພາຍໃນ, ການຄ້າຊາຍແດນ ແລະ ປັດໄຈການຜະລິດ ຢູ່ເມືອງເງິນ, ເມືອງຫົງສາແລະເມືອງແກ່ນທ້າວແຂວງໄຊຍະບູລີ.

ໂອກາດດັ່ງກ່າວ, ທ່ານ ມະນີໂສ ຊາມຸນຕີ ພ້ອມດ້ວຍຄະນະ ກໍໄດ້ເຂົ້າພົບທ່ານຮອງເຈົ້າແຂວງ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວວຽກງານ ແລະ ຮ່ວມເຮັດວຽກກັບສະພາປະຊາຊົນແຂວງ. ຈາກນັ້ນ, ໄດ້ຈັດກອງປະຊຸມຮ່ວມກັບຂະແໜງການທີ່ກ່ຽວຂ້ອງຂອງເມືອງແລະພະແນກການທີ່ກ່ຽວຂ້ອງຂອງແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ມະນີໂສ ຊາມຸນຕີ ແລະ ທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງເພື່ອຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳທີ່ຕິດພັນກັບການຈັດຕັ້ງປະຕິບັດນະໂຍບາຍ, ການນຳເຂົ້າ, ປຸງແຕ່ງນ້ຳ

ອ່ານຕໍ່ໜ້າ 4



ເຜົາ... (ໜ້າ 9)



5 ສະໝຸນໄພ... (ໜ້າ 10)



ພັກ VMRO-DPMNE ... (ໜ້າ 11)




ຍາມກິນເຂົ້າ... (ໜ້າ 12)

# ກສຕສ ຕິດຕາມກວດກາໂຄງການເຊົ່າ ແລະ ສໍາປະທານທີ່ດິນຂອງໂຄງການແຮ່ທາດ ແລະ ເຂື່ອນໄຟຟ້າ




(ສພຊ) - ລະຫວ່າງວັນທີ 5-14 ພຶດສະພາຜ່ານມາ, ທ່ານ ຄໍາມ່ອນ ຊິມສີຫາປັນຍາ ຮອງປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະໄດ້ລົງເຄື່ອນໄຫວຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດໂຄງການເຊົ່າ ແລະ ສໍາປະທານທີ່ດິນຂອງບັນດາໂຄງການພັດທະນາແຮ່ທາດ ແລະ ເຂື່ອນໄຟຟ້າ ທີ່ແຂວງອັດຕະປື, ແຂວງເຊກອງ ແລະ ແຂວງບໍລິຄໍາໄຊ ຕາມລໍາດັບ. ທັງນີ້ ກໍເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ, ດ້ານອ່ອນຂໍ້ຄົງຄ້າງທີ່ຈະຕ້ອງຊອກວິທີແກ້ໄຂໃນການຈັດຕັ້ງປະຕິບັດໂຄງການ; ເພື່ອຮູ້ເຖິງຜົນປະໂຫຍດທີ່ລັດຖະບານຈະໄດ້ຮັບຈາກການເຊົ່າ ແລະສໍາປະທານທີ່ດິນ ຈາກການຂຸດຄົ້ນແຮ່ທາດ ແລະ ໂຄງການພັດທະນາເຂື່ອນໄຟຟ້າ; ທັງເປັນຂໍ້ມູນພື້ນຖານໃນການສ້າງແລະປັບປຸງກົດໝາຍວ່າດ້ວຍແຮ່ທາດ ແລະ ກົດໝາຍວ່າດ້ວຍໄຟຟ້າ ທີ່ຈະນໍາເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX, ເປັນຂໍ້ມູນພື້ນຖານ ແລະ ບ່ອນອີງໃນການສັງລວມລາຍງານຕໍ່ກອງປະຊຸມ ສພຊ, ຄະນະປະຈໍາສະພາແຫ່ງຊາດ ຄົ້ນຄວ້າພິຈາລະນາ.

ໃນການລົງເຄື່ອນໄຫວຄັ້ງນີ້, ໄດ້ຈັດກອງປະຊຸມຮ່ວມກັບສະພາປະຊາຊົນແຂວງ ອັດຕະປື, ເຊກອງ ແລະ ບໍລິຄໍາໄຊ ແລະ ພະແນກການທີ່ກ່ຽວຂ້ອງຂອງແຂວງ ຄື: ແຜນການ ແລະ ການລົງທຶນ, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ກະສິກໍາ ແລະ ປ່າໄມ້, ອຸດສາຫະກໍາ ແລະ ການຄ້າ, ແລະ ການເງິນ ເພື່ອຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດໂຄງການເຊົ່າແລະສໍາປະທານທີ່ດິນຂອງບັນດາໂຄງການພັດທະນາແຮ່ທາດ ແລະ ເຂື່ອນໄຟຟ້າ, ສະພາບການຈັດຕັ້ງປະຕິບັດການລົງທຶນດ້ານພະລັງງານ ແລະ ແຮ່ທາດ; ການຫັນປ່ຽນທີ່ດິນປ່າໄມ້, ການຟື້ນຟູປ່າ ແລະ ປູກປ່າທົດແທນຄືນພື້ນທີ່ປ່າໄມ້ທາງທໍາມະຊາດ ແລະ ການຂຶ້ນທະບຽນອອກໃບຕາດິນ; ຜົນກະທົບຕໍ່ສິ່ງແວດລ້ອມ, ທໍາມະຊາດ ແລະ ສັງຄົມ; ການຟື້ນຟູຊີວິດການເປັນຢູ່, ການຊົດເຊີຍຜົນກະທົບໃຫ້ແກ່ປະຊາຊົນ; ການສົ່ງອອກແຮ່ທາດລວມທັງການເກັບລາຍຮັບຄ່າເຊົ່າແລະສໍາປະທານຈາກໂຄງການພັດທະນາດ້ານພະລັງງານ ແລະ ບໍ່ແຮ່ ໃນຮູບແບບປົກກະຕິ ແລະ ແບບທົດລອງ ແລະ ວຽກງານອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນມະຕິຂອງສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023 ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະດ້ານອ່ອນຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ.

ທ່ານ ຄໍາມ່ອນ ຊິມສີຫາປັນຍາ ໃນນາມປະທານກອງປະຊຸມ ໄດ້ມີຄໍາເຫັນຊີ້ນໍາໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈົ່ງສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍໃຫ້ມີສ່ວນຮ່ວມແລະເປັນເຈົ້າການຮ່ວມກັນຈັດຕັ້ງປະຕິບັດໃຫ້ເຂັ້ມງວດຂຶ້ນຕື່ມ ເປັນຕົ້ນ: ຂົງເຂດວຽກງານແຮ່ທາດ: ໃຫ້ຮີບຮ້ອນປະເມີນຜົນການຈັດຕັ້ງປະຕິບັດໂຄງການທົດລອງຂຸດຄົ້ນແຮ່ທາດທີ່ກໍາລັງຈັດຕັ້ງປະຕິບັດຢູ່ພາຍໃນແຂວງໃຫ້ມີປະສິດທິພາບ, ປະສິດທິຜົນ ພ້ອມທັງມີມາດຕະການຢ່າງເຂັ້ມງວດຕໍ່ໂຄງການທີ່ບໍ່ມີປະສິດທິພາບ, ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ ຄວນໂຈະຫຼືຢຸດເຊົາກິດຈະການ, ໂຄງການໃດທີ່ມີປະສິດທິຜົນຄວນໃຫ້ສືບຕໍ່ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ໂດຍຫັນເຂົ້າສູ່ການດໍາເນີນໂຄງການໃນຮູບແບບປົກກະຕິ; ການຄົ້ນຄວ້າອະນຸມັດໂຄງການຂຸດຄົ້ນແຮ່ທາດໃນຕໍ່ໜ້າຕ້ອງໃຫ້ສອດຄ່ອງກັບຍຸດທະສາດການພັດທະນາແຮ່ທາດທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ແລະ ແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ກ່ຽວກັບການພິຈາລະນາການອະນຸມັດໂຄງການຂຸດຄົ້ນແຮ່ທາດສະບັບເລກທີ647/ຄລສ, ລົງວັນທີ 27 ທັນວາ 2023; ເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາບັນດາໂຄງການຊອກຄົ້ນ, ສໍາຫຼວດ ແລະ ຂຸດຄົ້ນແຮ່ທາດ ໃຫ້ມີປະສິດທິພາບ, ປະສິດທິຜົນ, ຍືນຍົງ, ປະຢັດ, ນໍາເອົາຜົນປະໂຫຍດມາສູ່ປະເທດຊາດ ແລະ ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ ເກີນກວ່າມາດຕະຖານກໍານົດໄວ້. ຂົງເຂດວຽກງານກະສິກໍາ ແລະ ປ່າໄມ້: ເອົາໃຈໃສ່ຄົ້ນຄວ້າ, ປັບປຸງນະໂຍບາຍ ແລະ ນິຕິກໍາ ກ່ຽວກັບການສົ່ງເສີມວຽກງານການຟື້ນຟູ ແລະ ປູກໄມ້ທົດແທນ ໂດຍການມີສ່ວນຮ່ວມລະຫວ່າງພາກລັດ, ຜູ້ປະກອບການ ແລະ ປະຊາຊົນ ໃຫ້ມີຄວາມຊັດເຈນ ແລະ ຮັດກຸມ; ສ້າງແຜນຟື້ນຟູປ່າ, ປູກໄມ້ທົດແທນ ແລະ ປົກປັກຮັກສາໃນແຕ່ລະຂົງເຂດເພື່ອໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດທີ່ກໍານົດໃຫ້ມີເນື້ອທີ່ປ່າປົກຫຸ້ມກວມ 70%; ສຸມໃສ່ຕິດຕາມ, ກວດກາ ແລະ ສັງລວມການປະຕິບັດພັນທະຕ່າງໆ ກ່ຽວກັບວຽກງານຟື້ນຟູປ່າໄມ້ ແລະ ປູກໄມ້ທົດແທນ ຕາມສັນຍາສໍາປະທານ, ກົດໝາຍ, ມະຕິສະພາແຫ່ງຊາດແລະນິຕິກໍາອື່ນທີ່ກ່ຽວຂ້ອງ ຂອງບັນດາໂຄງການກໍ່ສ້າງເຂື່ອນໄຟຟ້າ, ບໍ່ແຮ່, ໂຄງລ່າງພື້ນຖານທີ່ໄດ້ຮັບອະນຸຍາດຈາກລັດຖະບານ ແລະ ຊຸກຍູ້ສົ່ງເສີມການຜະລິດ, ຫຼຸດຜ່ອນການນໍາເຂົ້າພາຍໃນທີ່ເປັນບຸລິມະສິດແລະທ່າແຮງຂອງແຂວງ. ຂົງເຂດວຽກງານຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ: ໃຫ້ຮີບຮ້ອນເອົາໃຈໃສ່ກວດກາ, ສໍາຫຼວດ, ວັດແທກ, ຂຶ້ນທະບຽນອອກໃບຕາດິນຂອງລັດໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານ ເພື່ອເປັນບ່ອນອີງໃຫ້ແກ່ການເກັບຄ່າເຊົ່າສໍາປະທານທີ່ດິນຕາມກົດໝາຍ ແລະ ເອົາໃຈໃສ່ເກັບກໍາຂໍ້ມູນເພື່ອຂຶ້ນທະບຽນອອກໃບຕາດິນ ແລະການຈັດສັນທີ່ດິນ ໃຫ້ສໍາເລັດ ແລະ ບັນລຸຕາມແຜນການທີ່ວາງໄວ້ ເພື່ອຮັບປະກັນໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ ພ້ອມທັງຮັບປະກັນບໍ່ໃຫ້ມີບັນຫາການຮ້ອງຟ້ອງຂໍຄວາມເປັນທໍາໃນອະນາຄົດ; ສືບຕໍ່ຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນຂອງແຂວງ, ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ໂດຍຕິດພັນກັບການຊຸກຍູ້ຢ່າງແຂງແຮງໃນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍທີ່ດິນ ໃຫ້ເຂົ້າສູ່ຊີວິດຕົວຈິງຂອງສັງຄົມໃຫ້ທົ່ວເຖິງແລະມີຜົນສັກສິດ; ສືບຕໍ່ຕິດຕາມຢ່າງໃກ້ຊິດບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດທີ່ອາດຈະເກີດຂຶ້ນຈາກໂຄງການພັດທະນາຕ່າງໆ ເປັນຕົ້ນ ໂຄງການພັດທະນາໄຟຟ້າ, ໂຄງການຂຸດຄົ້ນແຮ່ທາດ(ແບບທົດລອງ), ໂຄງການພັດທະນາພື້ນຖານໂຄງລ່າງອື່ນໆ.

ພາຍຫຼັງປິດກອງປະຊຸມ, ຄະນະຍັງໄດ້ໄປຢ້ຽມຊົມພາກປະຕິບັດຕົວຈິງຄື: ໂຄງການຂຸດຄົ້ນແຮ່ເຫຼັກວັງຕັດ ຈໍາກັດຜູ້ດຽວ, ໂຄງການຂຸດຄົ້ນແຮ່ບົກຊິດ ຂອງບໍລິສັດ ພັດທະນາແຮ່ບົກຊິດລາວ ຈໍາກັດຜູ້ດຽວ ຢູ່ເມືອງຊານໄຊ ແລະໂຄງການຂຸດຄົ້ນແຮ່ຄໍາເຄົ້າ (ແບບທົດລອງ) ຂອງບໍລິສັດ ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ພາກໃຕ້ ຈໍາກັດ ຢູ່ເມືອງພູວົງ ແຂວງອັດຕະປື; ໂຄງການພະລັງງານລົມ ມອນຊູນ ວິນພາວເວີ ຈໍາກັດ ຢູ່ເມືອງດາກຈຶງ ແລະ ໂຄງການຂຸດຄົ້ນແຮ່ທາດຂອງບໍລິສັດ ຫວຽດເຟືອງ ຈໍາກັດ ຢູ່ແຂວງເຊກອງ; ໂຄງການສໍາຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ຄໍາເຄົ້າ ຂອງບໍລິສັດ ທາຍຊານ ມາຍນິງ ຈໍາກັດຜູ້ດຽວ, ໂຄງການຂຸດຄົ້ນຄໍາຂອງບໍລິສັດ ຄໍາເກີດ ແສນອຸດົມ ຈໍາກັດແລະໂຄງການເຂື່ອນນໍ້າເທີນ 1 ຂອງບໍລິສັດ ນໍ້າເທີນພາວເວີ ຈໍາກັດ ຢູ່ແຂວງບໍລິຄໍາໄຊ.

**(ນາງ ສຸດສາຄອນ ຈັນທະມາດ)**






***# ຄັດໂດຍ: ທອມສະນິດ***

*❒ ການລະບາດຂອງພະຍາດໄຂ້ຍຸງລາຍ ຍັງເປັນໜຶ່ງບັນຫາທີ່ເກີດຂຶ້ນ ຢູ່ ສປປ ລາວ ນັບມື້ເພີ່ມຂຶ້ນ ໂດຍສະເພາະເລີ່ມແຕ່ວັນທີ 1 ເດືອນມັງກອນ ຫາວັນທີ 7 ພຶດສະພາ 2024 ທົ່ວປະເທດມີໂຕເລກໄຂ້ຍຸງລາຍສະສົມທັງໝົດ 2.770 ຄົນ ແຂວງທີ່ມີການລະບາດຫຼາຍກ່ອນໝູ່ແມ່ນແຂວງເຊກອງ 881 ຄົນ ເສຍຊີວິດ 1 ຄົນ, ນະຄອນຫຼວງວຽງຈັນ 566 ຄົນ ເສຍຊີວິດ 2 ຄົນ, ສະຫວັນນະເຂດ 158 ຄົນ ບໍ່ມີຜູ້ເສຍຊີວິດ ແລະ ແຂວງອື່ນໆຕາມລໍາດັບ. ສະນັ້ນ, ປັດຈຸບັນກ້າວເຂົ້າສູ່ໄລຍະລະດູຝົນທຸກຄົນໃນສັງຄົມຈົ່ງຮ່ວມແຮງຮ່ວມໃຈກັນປ້ອງກັນພະຍາດດັ່ງກ່າວ ໂດຍການກໍາຈັດແຫຼ່ງເພາະພັນໜອນນໍ້າຍຸງລາຍ ສິ່ງສໍາຄັນຕ້ອງປະຕິບັດຫຼັກການ 5 ປ ທີ່ກະຊວງສາທາລະນະສຸກ ວາງອອກຢ່າງເຂັ້ມງວດ ຖ້າບໍ່ມີໜອນນໍ້າ ບໍ່ມີຍຸງລາຍ ບໍ່ມີໄຂ້ຍຸງລາຍ.*

***ໜສພ. ປະຊາຊົນ 10/05/2024***

*❒ ຕາມຂໍ້ມູນຈາກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໃຫ້ຮູ້ວ່າ: ໃນໄລຍະ 3 ເດືອນຕົ້ນປີ 2024 ນີ້ ມີນັກທ່ອງທ່ຽວຕ່າງປະເທດ ເຂົ້າມາທ່ອງທ່ຽວ ຢູ່ ສປປ ລາວ 1,1 ລ້ານເທື່ອຄົນ. ໃນນັ້ນ, ນັກທ່ອງທ່ຽວມາຈາກໄທ 347.595 ຄົນ, ຫວຽດນາມ 264.710 ຄົນ, ຈີນ 242.404 ຄົນ, ສ ເກົາຫລີ 105.642 ຄົນ, ອາເມລິກາ 25.455 ຄົນ, ຝຣັ່ງ 20.339 ຄົນ, ອັງກິດ 14.2718 ຄົນ. ຣັດເຊຍ 11.805 ຄົນ ແລະ ນັກທ່ອງທ່ຽວ ຈາກປະເທດເຢຍລະມັນ 9.523 ຄົນ.*

***ໜສພ. ປະເທດລາວ 14/05/2024***

*❒ ປີ 2024 ກະຊວງອຸດສາຫະກໍາ ແລະ ການຄ້າ ເນັ້ນການສົ່ງເສີມ ແລະ ພັດທະນາອຸດສາຫະກໍາປຸງແຕ່ງ ໃຫ້ເຕີບໂຕມີຄຸນນະພາບ ຕາມທິດສີມດຸນ, ສີຂຽວ ແລະ ຍືນຍົງ ປະຕິບັດແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ປີ 2021-2025 ໂດຍສືບຕໍ່ສຸມໃສ່ຜັນຂະຫຍາຍ 8 ກຸ່ມອຸດສາຫະກໍາທ່າແຮງ ເພື່ອຊຸກຍູ້ສົ່ງເສີມການຜະລິດພາຍໃນໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະສົ່ງເສີມການປຸງແຕ່ງເພື່ອທົດແທນການນໍາເຂົ້າ ແລະ ສົ່ງເສີມການສົ່ງອອກໃຫ້ໄດ້ຫຼາຍຂຶ້ນ, ສຸມໃສ່ສົ່ງເສີມ ແລະ ພັດທະນາຜະລິດຕະພັນຫັດຖະກໍາທີ່ມີທ່າແຮງ ເຊັ່ນ: ຂະແໜງແຜ່ນແພພື້ນເມືອງ, ຂະແໜງໄມ້, ຫວາຍ ແລະ ໄມ້ປ່ອງ, ຂະແໜງເຈ້ຍພື້ນເມືອງ, ຂະແໜງສິລະປະໂລຫະ ແລະ ອະໂລຫະ, ຂະແໜງປັ້ນ ດິນເຜົາ, ຂະແໜງເຄື່ອງປະດັບ ແລະ ເຄື່ອງເອ້ຍ້ອງ ແລະ ຂະແໜງອາຫານ ແລະ ເຄື່ອງດື່ມພື້ນເມືອງ; ສົ່ງເສີມການຜະລິດຫັດຖະກໍາເຊື່ອມໂຍງກັບການທ່ອງທ່ຽວ ແມ່ນການນໍາເອົາສິນຄ້າເອກະລັກ, ສິນຄ້າ ຫັດຖະກໍາທີ່ມີຊື່ສຽງ, ສິນຄ້າມີຄຸນນະພາບຕາມຄວາມຕ້ອງການຂອງຕະຫຼາດ ແລະແບບແຜນການຂອງຊາວຊ່າງ ແລະຫົວໜ່ວຍຫັດຖະກໍາ ເປັນຈຸດຂາຍ ເພື່ອດຶງດູດ ແລະປະກອບສ່ວນໃນກິດຈະກໍາການ ທ່ອງທ່ຽວລາວປີ 2024.*

***ໜສພ. ປະຊາຊົນ 15/05/2024***

# ສ້າງຄວາມເຂັ້ມແຂງວຽກງານ ຄຸ້ມຄອງແຜນການລົງທຶນຂອງລັດ




(ສພຊ) - ເພື່ອຜັນຂະຫຍາຍບັນດານິຕິກຳທີ່ກ່ຽວຂ້ອງເປັນຕົ້ນ: ກົດໝາຍວ່າດ້ວຍການລົງທຶນຂອງລັດ, ຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ໂດຍສະເພາະການສ້າງແຜນການ, ການປະເມີນໂຄງການເຂົ້າແຜນ, ການຄຸ້ມຄອງແຜນການລົງທຶນຂອງລັດ, ການຄົ້ນຄວ້າດັດແກ້ມູນຄ່າໂຄງການ, ການຊຳລະງົບປະມານ ແລະ ວຽກປິ່ນອ້ອມອື່ນໆ ໃຫ້ແກ່ຄະນະນຳສະພາປະຊາຊົນຂັ້ນແຂວງ (ສພຂ) ພາກກາງ, ພາກໃຕ້ແລະໜ່ວຍງານຮັບຜິດຊອບຄຸ້ມຄອງແຜນການລົງທຶນຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ຮັບຮູ້, ເຂົ້າໃຈ ພ້ອມທັງນຳໄປຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງ; ເພື່ອປຶກສາຫາລືກົນໄກປະສານງານລະຫວ່າງສູນກາງກັບທ້ອງຖິ່ນໃນການຄຸ້ມຄອງແຜນການລົງທຶນຂອງລັດຂອງສະພາແຫ່ງຊາດ (ສພຊ)ທີ່ຕັ້ງຢູ່ບັນດາແຂວງພາກກາງ ແລະ ພາກໃຕ້ ໃຫ້ມີຄວາມໂລ່ງລ່ຽນ ແລະ ໃກ້ຊິດຕິດແທດກັນຫຼາຍຂຶ້ນ ທັງເປັນການພົບປະ ແລະ ແລກປ່ຽນບົດຮຽນວຽກງານຄຸ້ມຄອງແຜນການລົງທຶນຂອງລັດຂອງ ສພຊ ລະຫວ່າງສູນກາງກັບທ້ອງຖິ່ນ ໂດຍສະເພາະກົມບໍລິຫານ-ພິທີການ ເຊິ່ງເປັນເສນາທິການໃຫ້ແກ່ຄະນະເລຂາທິການສະພາແຫ່ງຊາດກັບສະມາຊິກສະພາແຫ່ງຊາດ ແລະ ຄະນະເລຂາທິການ ສພຂ ເພື່ອໃຫ້ຮັບຮູ້ແລະເຂົ້າໃຈກ່ຽວກັບການເຄື່ອນໄຫວວຽກງານຄຸ້ມຄອງແຜນການລົງທຶນຂອງລັດຂອງ ສພຊ ນັບມື້ນັບຫຼາຍຂຶ້ນ.

ລະຫວ່າງວັນທີ 14-15 ພຶດສະພາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ມີກອງປະຊຸມເຝິກອົບຮົມວຽກງານຄຸ້ມຄອງແຜນການລົງທຶນຂອງລັດຂອງສະພາແຫ່ງຊາດ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະນຳຂອງສະພາປະຊາຊົນຂັ້ນແຂວງ 9 ແຂວງພາກກາງ ແລະ ພາກໃຕ້ ຄື: ນະຄອນຫຼວງວຽງຈັນ, ວຽງຈັນ, ບໍລິຄຳໄຊ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ, ອັດຕະປື ແລະ ໄຊສົມບູນ ໂດຍການເປັນປະທານຮ່ວມຂອງທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ແລະທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງສະຫວັນນະເຂດ; ເຂົ້າຮ່ວມມີບັນດາທ່ານວິທະຍາກອນຈາກກະຊວງແຜນການ ແລະ ການລົງທຶນ ແລະ ຈາກສພຊພ້ອມດ້ວຍສຳມະນາກອນຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ແຂກຖືກເຊີນ.

ໃນພິທີເປີດ, ທ່ານ ສິງຄຳ ວົງພະຈັນ ໄດ້ມີຄຳເຫັນເນັ້ນໜັກໃຫ້ຜູ້ເຂົ້າຮ່ວມເອົາໃຈໃສ່ຮັບຟັງ ແລະສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າແລກປ່ຽນບົດຮຽນຕໍ່ບັນດາເນື້ອໃນຢ່າງຟົດຟື້ນ, ສ້າງສັນ, ແລກປ່ຽນບົດຮຽນທິດສະດີ ແລະ ສົມທຽບໃສ່ກັບການປະຕິບັດວຽກງານຕົວຈິງຂອງຕົນ; ນອກຈາກບົດຮຽນແລ້ວ, ຍັງມີການສົນທະນາແລກປ່ຽນປະສົບການຕົວຈິງທີ່ໄດ້ປະສົບພົບພໍ້ມາ ໂດຍສະເພາະແມ່ນການຄຸ້ມຄອງແຜນການລົງທຶນຂອງລັດຢູ່ສະພາປະຊາຊົນຂັ້ນແຂວງ. ສະນັ້ນ, ຖ້າມີບັນຫາໃດເພີ່ມຕື່ມທີ່ເໝາະສົມ ນອນຢູ່ໃນຂອບເຂດຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ ກໍສາມາດນຳມາແລກປ່ຽນບົດຮຽນ ແລະ ສະເໜີຕໍ່ການຈັດຕັ້ງ ເພື່ອຮັບປະກັນຄວາມເຂົ້າໃຈຖືກຕ້ອງສອດຄ່ອງກັບນິຕິກຳວາງອອກ ແລະ ສະພາບຄວາມເປັນຈິງຂອງວຽກງານສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງໃນໄລຍະໃໝ່.

ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຮັບຟັງຂັ້ນຕອນການວາງແຜນການລົງທຶນຂອງລັດ, ເຜີຍແຜ່ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ, ວິທີການຄົ້ນຄວ້າຈັດສັນເພດານງົບປະມານລົງທຶນຂອງລັດໃຫ້ບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ທີ່ສອດຄ່ອງກັບແຜນພັດທະນາຂອງແຕ່ລະພາກສ່ວນ ໃນໄລຍະ 5 ປີ ແລະ ປະຈຳປີ; ເຜີຍແຜ່ກົນໄກ-ວິທີການຄຸ້ມຄອງການລົງທຶນຂອງລັດ, ການຕິດຕາມກວດກາ ແລະ ການຢັ້ງຢືນເອກະສານຊຳລະໂຄງການລົງທຶນ, ຄົ້ນຄວ້າການດັດແກ້ມູນຄ່າໂຄງການ, ອວ່າຍທຶນ, ໂຈະ ແລະ ຍົກເລີກໂຄງການລົງທຶນຂອງລັດ; ຮູບແບບການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ; ເຜີຍແຜ່ຄຳແນະນຳວ່າດ້ວຍການຈັດຕັ້ງປະຕິບັດວຽກງານການປະເມີນຜົນໂຄງການລົງທຶນຂອງລັດ, ຫຼັກວິຊາການຂອງການປະເມີນ, ການປະເມີນໂຄງການສະເໜີໃໝ່, ການປະເມີນຄືນໂຄງການລົງທຶນຂອງລັດໃນກໍລະນີມີການດັດແກ້ ຫຼື ປ່ຽນແປງມູນຄ່າທີ່ມີການປ່ຽນແປງທາງດ້ານໂຄງສ້າງຕາມການຢັ້ງຢືນຂອງຂະແໜງການເຕັກນິກ; ການຕິດຕາມກວດກາການຈັດສັນງົບປະມານການລົງທຶນຂອງລັດ; ຂັ້ນຕອນການລະດົມຂົນຂວາຍແຫຼ່ງທຶນການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ສ້າງຄວາມເຂັ້ມແຂງວຽກງານຮ່ວມມືຂັ້ນສູນກາງ, ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ; ວິທີການຄຸ້ມຄອງແຜນການລົງທຶນຂອງລັດ ຂອງຄະນະເລຂາທິການສະພາແຫ່ງຊາດ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

# ກຳມາທິການບັນດາເຜົ່າ ເຄື່ອນໄຫວເກັບກຳຂໍ້ມູນ ຊີວິດການເປັນຢູ່ຂອງຊົນເຜົ່າກຣີ (ຕອງເຫຼືອງ)



ຫົວໜ້າກົມວຽກງານຊົນເຜົ່າ, ກຳມາທິການບັນດາເຜົ່າສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສົມທົບກັບວິຊາການຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າຂອງສະພາປະຊາຊົນແຂວງໄຊຍະບູລີແລະຄະນະທີມງານຈາກເມືອງພຽງ ໄດ້ເຄື່ອນໄຫວເກັບກຳຂໍ້ມູນຊີວິດການເປັນຢູ່ ແລະ ຮັບຟັງຄວາມມຸ່ງມາດປາຖະໜາຂອງປະຊາຊົນທີ່ເປັນຊົນເຜົ່າກຣີ (ເຜົ່າຕອງເຫຼືອງ) ຢູ່ທີ່ປ່າສະຫງວນແຫ່ງຊາດນ້ຳປຸຍ ບ້ານໂພນທອງ ເມືອງພຽງ; ພ້ອມດຽວກັນນີ້, ຄະນະຍັງໄດ້ຢ້ຽມຢາມເດັກນ້ອຍ 3 ຄົນ ທີ່ໄດ້ເຂົ້າໂຮງຮຽນອະນຸບານ ແລະ ປະຖົມສົມບູນບ້ານກາງ ເມືອງປາກລາຍ ເຊິ່ງເປັນເດັກກຸ່ມທຳອິດຂອງລູກຫຼານຊົນເຜົ່າກຣີ, ຖືເປັນຕົວແທນຂອງເຜົ່າ ແລະ ຈະກາຍເປັນໜໍ່ແໜງຊາດໃນອະນາຄົດ.

ຊົນເຜົ່າກຣີ (ເຜົ່າຕອງເຫຼືອງ) ແມ່ນຊົນເຜົ່າໜຶ່ງນອນຢູ່ໃນ 50 ຊົນເຜົ່າໃນວົງຄະນາຍາດແຫ່ງຊາດລາວ ຕາມມະຕິຂອງສະພາແຫ່ງຊາດ ສະບັບເລກທີ 213/ສພຊ ໄດ້ຮັບຮອງເອົາໃນວັນທີ 24 ພະຈິກ 2008; ຊົນເຜົ່າກຣີ ມີພາສາປາກເວົ້າເປັນຂອງຕົນເອງເອີ້ນວ່າ: "ມາບຣີ" ຈັດໃນໝວດພາສາມອນ-ຂະແມ ເຊິ່ງຊົນເຜົ່າດັ່ງກ່າວໄດ້ດຳລົງຊີວິດຢູ່ເຂດປ່າສະຫງວນແຫ່ງຊາດນ້ຳປຸຍ ເມືອງພຽງ ແຂວງໄຊຍະບູລີ ມາເປັນເວລາດົນນານແລ້ວ, ປັດຈຸບັນນີ້ ມີພົນລະເມືອງທັງໝົດ 19 ຄົນ ຍິງ 9 ຄົນ ແລະ ມີ 4 ເຄືອຍາດຢູ່ຮ່ວມກັນ.

# ກຸ່ມການສຶກສາລາວສ້າງຝັນ ທັດສະນະສຶກສາ ຢູ່ສະພາແຫ່ງຊາດ



(ສພຊ) - ໃນຕອນແລງວັນພະຫັດທີ 09 ພຶດສະພາ 2024 ທ່ານ ທັດສະຫວັນ ແຣມະນີ ຜູ້ອຳນວຍການກຸ່ມການສຶກສາລາວສ້າງຝັນ ໄດ້ນຳພານ້ອງໆນັກຮຽນພອນສະຫວັນ ອາຍຸ 9-13 ປີ ຈຳນວນ 25 ຄົນ ຈາກກຸ່ມໂຮງຮຽນດັ່ງກ່າວ ມາທັດສະນະສຶກສາ ແລະ ຢ້ຽມຊົມຫໍສະພາແຫ່ງຊາດ ເພື່ອຮັບຮູ້ ແລະ ມີຄວາມເຂົ້າໃຈພາລະບົດບາດ, ສິດ ແລະ ໜ້າທີ່, ໂຄງຮ່າງການຈັດຕັ້ງ ແລະ ສຳພັດກັບສະຖານທີ່ຕົວຈິງ ເຊິ່ງຈະເປັນການປູພື້ນຖານໃຫ້ນ້ອງໆນັກຮຽນ ຮູ້ເຖິງບົດບາດຄວາມສຳຄັນຂອງສະພາແຫ່ງຊາດຕໍ່ກັບຂະບວນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ໃຫ້ການຕ້ອນຮັບການທັດສະນະສຶກສາ ໂດຍທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າກົມສື່ມວນຊົນ, ຄະນະເລຂາທິການສະພາແຫ່ງຊາດ ຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ນຳພາຄະນະຢ້ຽມຊົມຫ້ອງປະຊຸມໃຫຍ່ ແລະ ຫ້ອງມູນເຊື້ອສະພາແຫ່ງຊາດ; ໃນໂອກາດທັດສະນະສຶກສາຄັ້ງນີ້, ບັນດານ້ອງໆນັກຮຽນ ແມ່ນມີຄວາມສົນໃຈຫຼາຍກ່ຽວກັບສະພາແຫ່ງຊາດ ເຊິ່ງສະແດງອອກໄດ້ມີການຖາມ-ຕອບຕໍ່ບັນຫາທີ່ນ້ອງໆນັກຮຽນໃຫ້ຄວາມສົນໃຈ.

**(ນາງ ອາລິນ ສຸພົມມະປະດິດ)**





## ຕິດຕາມ...

(ຕໍ່ຈາກໜ້າ 1)

ມັນເຊື້ອໄຟ ເພື່ອສະໜອງການຊົມໃຊ້ພາຍໃນ, ການຄ້າຊາຍແດນ ແລະ ປັດໄຈການຜະລິດ ພ້ອມທັງຮັບຟັງການລາຍງານສະພາບຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 103/ຄປຈ, ລົງວັນທີ 09 ພຶດສະພາ 2022 ວ່າດ້ວຍການຮັບຮອງມາດຕະການຮັກສາສະຖຽນລະພາບຂອງລາຄານ້ຳມັນເຊື້ອໄຟໃນສະພາບລາຄາມີການເໜັງຕີງຂຶ້ນສູງໂດຍສະເພາະການຊຸກຍູ້ສົ່ງເສີມແລະການຄຸ້ມຄອງການນຳເຂົ້າ ເພື່ອສະໜອງການຊົມໃຊ້ພາຍໃນປະເທດ ຮັບປະກັນສະຖຽນລະພາບໃນການສະໜອງນ້ຳມັນເຊື້ອໄຟໃຫ້ມີຄວາມພຽງພໍແລະຕໍ່ເນື່ອງ ໃນຕໍ່ໜ້າ ແລະ ໄລຍະຍາວ, ຫຼີກລ່ຽງຄວາມສ່ຽງທີ່ຈະເກີດສະພາບຂາດແຄນນ້ຳມັນເຊື້ອໄຟແລະມີສະຖຽນລະພາບທາງດ້ານລາຄາ; ການຈັດຕັ້ງປະຕິບັດວຽກງານການຄ້າຊາຍແດນ ແລະ ການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າຢູ່ດ່ານຊາຍແດນ, ກົນໄກການຈັດຕັ້ງປະຕິບັດກ່ຽວກັບການຊຳລະ/ຮັບຊຳລະຈາກການນຳເຂົ້າ-ສົ່ງອອກສິນຄ້າ ຮັບປະກັນການຕິດຕາມການຊຳລະຂອງບັນດາຫົວໜ່ວຍທຸລະກິດທີ່ເຮັດການຄ້າກັບຕ່າງປະເທດ ໃຫ້ເຂົ້າສູ່ລະບົບ ແລະ ສາມາດກວດສອບໄດ້; ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025) ແລະ ແຜນການທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ສະບັບເລກທີ 119/ສພຊ, ລົງວັນທີ 21 ພະຈິກ 2023. ຫຼັງຈາກນັ້ນ, ໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ດ້ານຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ບັນລຸຕາມຄາດໝາຍທີ່ວາງໄວ້.

ຕອນທ້າຍຂອງກອງປະຊຸມ, ທ່ານ ມະນີໂສ ຊາມຸນຕີ ໄດ້ມີຄຳເຫັນຊີ້ນຳໃຫ້ແຕ່ລະຂະແໜງການ ເພີ່ມທະວີ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ມີປະສິດທິພາບ ແລະປະສິດທິຜົນກວ່າເກົ່າເປັນຕົ້ນແມ່ນການຄຸ້ມຄອງການນຳເຂົ້າ, ຈຳໜ່າຍນ້ຳມັນເຊື້ອໄຟ ແລະການຊຳລະ: ມອບໃຫ້ພາກສ່ວນກ່ຽວຂ້ອງຂອງແຂວງ ປະສານສົມທົບກັບສູນກາງ, ເມືອງທີ່ມີດ່ານຊາຍແດນຕິດກັບປະເທດເພື່ອນບ້ານ ແລະຜູ້ປະກອບການ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ ແລະການສົ່ງເສີມການຜະລິດປຸງແຕ່ງນ້ຳມັນເຊື້ອໄຟພາຍໃນ, ການແຈກຢາຍນ້ຳມັນເຊື້ອໄຟໃນການສະໜອງການຊົມໃຊ້ພາຍໃນທ້ອງຖິ່ນພ້ອມທັງເອົາໃຈໃສ່ຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ, ການຊຳລະ/ຮັບຊຳລະ ຈາກການນຳເຂົ້າ-ສົ່ງອອກຢູ່ດ່ານຊາຍແດນ; ການສົ່ງເສີມປັດໄຈການຜະລິດ ແລະ ການຜະລິດພາຍໃນເພື່ອຫຼຸດຜ່ອນການນຳເຂົ້າ: ມອບໃຫ້ພາກສ່ວນກ່ຽວຂ້ອງຂອງແຂວງ ປະສານສົມທົບກັບເມືອງທີ່ມີທ່າແຮງ, ສະຫະກອນ, ຜູ້ຜະລິດກະສິກຳ ແລະ ຊາວກະສິກອນ ເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳໃຕ້ກົດໝາຍທີ່ຕິດພັນ ເພື່ອຊຸກຍູ້ສົ່ງເສີມການຜະລິດກະສິກຳທີ່ເປັນທ່າແຮງຂອງປະເທດ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ສົ່ງເສີມຜະລິດເປັນສິນຄ້າສົ່ງອອກດ້ວຍການສະໜອງປັດໄຈການຜະລິດ ເປັນຕົ້ນເຕັກນິກວິຊາການ, ແນວພັນພືດ, ແນວພັນສັດ, ຝຸ່ນ ແລະ ອາຫານສັດ ທີ່ມີຄຸນນະພາບ ແລະ ຈັດສັນກຳນົດເຂດທີ່ດິນກະສິກຳໃຫ້ມີຄວາມຊັດເຈນ, ຄຸ້ມຄອງທີ່ດິນກະສິກຳ, ຊົນລະປະທານ ແລະ ສົ່ງເສີມການຕັ້ງກຸ່ມ, ສະຫະກອນການຜະລິດໃຫ້ເກີດດອກອອກຜົນ ແລະ ຍືນຍົງ.

ພ້ອມກັນນີ້, ຄະນະຍັງໄດ້ເດີນທາງໄປເບິ່ງເຂດພື້ນທີ່ຕົວຈິງສາງເກັບນ້ຳມັນຂອງບໍລິສັດນຳເຂົ້ານ້ຳມັນເຊື້ອໄຟຢູ່ເມືອງເງິນ, ເມືອງແກ່ນທ້າວ; ຈຸດກໍ່ສ້າງຝາຍເກັບນ້ຳຫ້ວຍໃຫຍ່, ຮັບຟັງການລາຍງານສະພາບການປູກຝັງລ້ຽງສັດ ແລະການຜະລິດຝຸ່ນ ຂອງກຸ່ມກະສິກອນ, ປະຊາຊົນ ຢູ່ເມືອງຫົງສາ; ໂຄງການກໍ່ສ້າງອ່າງເກັບນ້ຳນ້ຳຊ້າງ ເມືອງແກ່ນທ້າວ; ລົງຕິດຕາມຢູ່ດ່ານນ້ຳເງິນ ເມືອງເງິນ, ດ່ານສາກົນເມືອງແກ່ນທ້າວ ແລະ ເບິ່ງຟາມລ້ຽງສັດຈຳນວນໜຶ່ງ.



## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນສຸກທີ 10 ພຶດສະພາ 2024 ທ່ານ ນາງ ທຸມມາລີ ວົງພະຈັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອຳລາຂອງທ່ານ ໂກບາຢາຊິ ເຄນອິຈິ (KOBAYASHI Kenichi) ເອກອັກຄະລາຊະທູດແຫ່ງຍີ່ປຸ່ນປະຈຳ ສປປ ລາວ ໃນໂອກາດທີ່ໄດ້ສຳເລັດພາລະໜ້າທີ່ທາງການທູດຢູ່ ສປປ ລາວ.

ທ່ານ ນາງ ທຸມມາລີ ວົງພະຈັນ ໃນນາມປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ຂອງສະພາແຫ່ງຊາດ ຊຸດທີ IX ແລະ ໃນນາມສ່ວນຕົວ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ, ຂອບອົກຂອບໃຈ ແລະຕີລາຄາສູງຕໍ່ການປະກອບສ່ວນອັນໃຫຍ່ຫຼວງຂອງທ່ານທູດ ເຂົ້າໃນການເສີມສ້າງສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ ແລະ ການຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ; ດ້ວຍການປະກອບສ່ວນ, ຊຸກຍູ້ ແລະ ອຳນວຍຄວາມສະດວກໃນຕະຫຼອດໄລຍະຜ່ານມາ ຈຶ່ງເຮັດໃຫ້ສາຍພົວພັນຮ່ວມມືດັ່ງກ່າວ ໂດຍສະເພາະແມ່ນການເຄື່ອນໄຫວວຽກງານຂອງຄະນະມິດຕະພາບລັດຖະສະພາຂອງສອງປະເທດມີບັນຍາກາດອັນໃໝ່ທີ່ດີຂຶ້ນ, ມີຜົນງານດີເດັ່ນຫຼາຍດ້ານ ແລະ ມີຜົນສຳເລັດໃຫຍ່ຫຼວງກວ່າເກົ່າ. ຕໍ່ຜົນງານດັ່ງກ່າວ, ຄະນະປະຈຳສະພາແຫ່ງຊາດ, ຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ຕີລາຄາສູງ, ຍ້ອງຍໍຊົມເຊີຍເປັນພິເສດແລະຫວັງຢ່າງຍິ່ງວ່າທ່ານຈະສືບຕໍ່ໃຫ້ການຮ່ວມມື, ຊ່ວຍເຫຼືອ ແລະ ປະກອບສ່ວນຕາມພາລະບົດບາດແລະຄວາມຮັບຜິດຊອບຂອງທ່ານ ເຂົ້າໃນການຊ່ວຍສະໜັບສະໜູນການພົວພັນຮ່ວມມືລະຫວ່າງ ສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ໃນຕໍ່ໜ້າ. ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ ສປປ ລາວ ໃນໄລຍະຜ່ານມາເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດຂອງພວກຂ້າພະເຈົ້າ.

ທ່ານ ໂກບາຢາຊິ ເຄນອິຈິ ໄດ້ສະແດງຄວາມຂອບໃຈຕໍ່ທ່ານປະທານກຳມາທິການວັດທະນະທຳ-ສັງຄົມ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນໃນຄັ້ງນີ້, ພ້ອມທັງສະແດງຄວາມຂອບໃຈຕໍ່ທຸກພາກສ່ວນຂອງສະພາແຫ່ງຊາດ ທີ່ໄດ້ໃຫ້ການພົວພັນຮ່ວມມື, ສະໜັບສະໜູນ, ອຳນວຍຄວາມສະດວກ ແລະ ຊ່ວຍເຫຼືອຕົນເອງຕະຫຼອດໄລຍະທີ່ປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ເຮັດໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ແລະ ຈະສືບຕໍ່ປະກອບສ່ວນ ເຮັດໃຫ້ການພົວພັນຮ່ວມມືລະຫວ່າງ ລາວ ແລະ ຍີ່ປຸ່ນ ໄດ້ຮັບການຂະຫຍາຍຕົວຍິ່ງໆຂຶ້ນ.

**(ອານຸສອນ ພູມມີທອນ)**



## ເອກອັກ...

(ຕໍ່ຈາກໜ້າ 1)

ໃນການຢ້ຽມຂໍ່ານັບ, ທ່ານ ນາງ Healther Roach Variava ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ພ້ອມທັງລາຍງານໃຫ້ຊາບການມາປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ໃນໄລຍະສອງເດືອນຜ່ານມາ.

ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ສະເໜີໃຫ້ສະໜັບສະໜູນນັກລົງທຶນຊາວອາເມລິກາ ເຂົ້າມາລົງທຶນຢູ່ ສປປ ລາວ ໃນຂະແໜງການທ່ອງທ່ຽວ, ກະສິກຳ ແລະຂະແໜງການອື່ນທີ່ມີຄວາມສົນໃຈ; ພ້ອມທັງໃຫ້ສືບຕໍ່ສະໜັບສະໜູນໂຄງການຊ່ວຍເຫຼືອລາວໃນຂົງເຂດວຽກງານເກັບກູ້ລະເບີດບໍ່ທັນແຕກທີ່ຍັງຕົກຄ້າງຢູ່ໃນແຜ່ນດິນລາວຕື່ມອີກ.

**(ນາງ ອາລິນ ສຸພົມມະປະດິດ)**

## ສປນວ ສຳມະນາຮ່າງຂໍ້ຕົກລົງ ຂອງອົງການປົກຄອງນະຄອນຫຼວງ




(ສພຊ) ກອງປະຊຸມສຳມະນາຮ່າງຂໍ້ຕົກລົງຂອງອົງການປົກຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຮັບຮອງລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ (ກມ 21 ຫາ ກມ 71) ເຂດບ້ານໂຄກສີວິໄລ, ເມືອງໄຊທານີ ຫາບ້ານສີມສະຫວາດ, ເມືອງປາກງື່ມ ນະຄອນຫຼວງວຽງຈັນ (ກມ 21 ຫາ ກມ 66) ໄດ້ດຳເນີນຂຶ້ນໃນວັນທີ 9 ພຶດສະພາ 2024 ຢູ່ທີ່ຫ້ອງປະຊຸມຂອງອົງການປົກຄອງນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນທາມ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ); ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ບັນດາພະແນກການກ່ຽວຂ້ອງອ້ອມຂ້າງນະຄອນຫຼວງວຽງຈັນ.

ກອງປະຊຸມສຳມະນາຄັ້ງນີ້, ແມ່ນເພື່ອຮັບປະກັນໃຫ້ແກ່ການສ້າງນິຕິກຳໃຕ້ກົດໝາຍຂອງອົງການປົກຄອງ ນະຄອນຫຼວງວຽງຈັນ ໃຫ້ມີເນື້ອໃນທີ່ຄົບຖ້ວນສົມບູນ, ຮັດກຸມ, ບັນລຸຜົນສຳເລັດຕາມລະດັບຄາດໝາຍ ແລະ ສາມາດຈັດຕັ້ງປະຕິບັດໄດ້ ແລະ ເພື່ອຮັບຟັງຄຳຄິດຄຳເຫັນຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຕໍ່ຮ່າງຂໍ້ຕົກລົງດັ່ງກ່າວ ເຊິ່ງທ່ານພຸດທະເສນ ສິນທະວົງ ໄດ້ລາຍງານໂດຍຫຍໍ້ກ່ຽວກັບຮ່າງຂໍ້ຕົກລົງວ່າດ້ວຍການຮັບຮອງເອົາຫົວໜ່ວຍທົດແທນ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ ກ່ຽວກັບປະຫວັດຄວາມເປັນມາ, ການອອກແບບໂຄງການ ແລະ ຄວາມຄືບໜ້າໄລຍະກະກຽມໂຄງການ.

ໂອກາດດັ່ງກ່າວ, ປະທານກອງປະຊຸມ ກໍໄດ້ມີຄຳເຫັນເຈາະຈີ້ມຕໍ່ຮ່າງຂໍ້ຕົກລົງ ໂດຍໄດ້ເນັ້ນກ່ຽວກັບການກຳນົດທາງດ້ານໂຄງສ້າງແລະເນື້ອໃນຂອງຮ່າງຂໍ້ຕົກລົງ, ການກຳນົດລາຄາຫົວໜ່ວຍທົດແທນທີ່ດິນ ແລະ ສິ່ງປຸກສ້າງ, ການກຳນົດຂອບເຂດຂອງການນຳໃຊ້ຂໍ້ຕົກລົງ, ການກຳນົດຫຼັກການ ແລະ ວິທີຄິດໄລ່ຫົວໜ່ວຍລາຄາ ໃຫ້ຜູ້ທີ່ຖືກຜົນກະທົບຈາກໂຄງການດັ່ງກ່າວ, ເຊິ່ງບັນດາທ່ານຜູ້ແທນກໍໄດ້ປະກອບຄຳຄິດຄຳເຫັນຕໍ່ຮ່າງຂໍ້ຕົກລົງດັ່ງກ່າວ ຢ່າງມີຈຸດສຸມ ເພື່ອໃຫ້ຄະນະຮັບຜິດຊອບໄດ້ນຳໄປຄົ້ນຄວ້າ ແລະ ປັບປຸງຄືນ ໃຫ້ມີເນື້ອໃນຄົບຖ້ວນສົມບູນດ້ານຫຼັກການ ແລະ ເນື້ອໃນໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ.

**(ນາງ ພອນທິບ ອິນທິລາດ)**

## ມອບ-ຮັບໜ້າທີ່ປະທານສະພາປະຊາຊົນແຂວງຫົວພັນ




(ສພຊ)-ພິທີມອບ-ຮັບໜ້າທີ່ປະທານສະພາປະຊາຊົນແຂວງ ລະຫວ່າງທ່ານ ນາງອຳໄພວອນ ລ້ອມບຸນແພງ ປະທານສະພາປະຊາຊົນແຂວງຫົວພັນ (ຜູ້ເກົ່າ) ແລະ ທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານສະພາປະຊາຊົນແຂວງ, ຮັກສາການປະທານສະພາປະຊາຊົນແຂວງຫົວພັນ (ຜູ້ໃໝ່) ໄດ້ຈັດຂຶ້ນໃນວັນທີ 9 ພຶດສະພາ 2024 ທີ່ຫ້ອງວ່າການແຂວງຫົວພັນ ໂດຍການເຂົ້າຮ່ວມຂອງທ່ານ ຄຳແພງ ໄຊສົມແພງ ເຈົ້າແຂວງຫົວພັນ; ມີບັນດາທ່ານຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ກຳມະການພັກແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສອງກອງບັນຊາການ, ບັນດາທ່ານເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມເປັນສັກຂີພິຍານ.

ໃນພິທີ, ທ່ານ ນາງ ລ້ອງຄຳ ພອນມີໄຊ ຄະນະປະຈຳພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ ໄດ້ຜ່ານຄຳສັ່ງຂອງກົມການເມືອງສູນກາງພັກສະບັບເລກທີ10/ກມສພ, ລົງວັນທີ 30 ເມສາ 2024 ວ່າດ້ວຍການຍົກຍ້າຍສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຫົວພັນ (ຜູ້ເກົ່າ) ໄປຮັບໜ້າທີ່ໃໝ່ເປັນເລຂາທິການສະພາແຫ່ງຊາດ ແລະ ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງຫົວພັນສະບັບເລກທີ 233/ ຄປຈຂ.ຫພ, ລົງວັນທີ 6 ພຶດສະພາ 2024 ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຮັກສາການແທນປະທານສະພາປະຊາຊົນແຂວງ ໂດຍເຫັນດີຮັບຮອງເອົາການແຕ່ງຕັ້ງທ່ານ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເປັນຮັກສາການປະທານສະພາປະຊາຊົນແຂວງຫົວພັນ.

ໂອກາດນີ້, ທ່ານ ຄຳແພງ ໄຊສົມແພງ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດຂອງທັງສອງທ່ານ ທີ່ຍາດມາໄດ້ໃນໄລຍະຜ່ານມາ ພ້ອມທັງສະເໜີໃຫ້ປະທານສະພາປະຊາຊົນແຂວງຜູ້ເກົ່າ ແລະ ຜູ້ໃໝ່ສືບຕໍ່ເສີມຂະຫຍາຍຄວາມເປັນແບບຢ່າງນຳໜ້າ, ປະສົບການໃນການນຳພາ-ຊີ້ນຳ ນຳໄປປັບປຸງກົງຈັກການຈັດຕັ້ງ ແລະແບບແຜນວິທີເຮັດວຽກບ່ອນໃໝ່ໃຫ້ດີຂຶ້ນກວ່າເກົ່າ ແລະ ສືບຕໍ່ໃຫ້ຄຳຄິດເຫັນ, ຄຳປຶກສາຫາລືໃນການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານຮອບດ້ານຂອງສະພາປະຊາຊົນແຂວງ ເພື່ອເປັນການຊ່ວຍແນະນຳບົດຮຽນໃນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງຕົນໃນຜ່ານມາໄດ້ຜັນຂະຫຍາຍເຂົ້າສູ່ພຶດຕິກຳຕົວຈິງຂອງເຂົາເຈົ້າໃຫ້ມີຜົນສຳເລັດ.

ຕໍ່ກັບຜູ້ຮັກສາການແທນ (ຜູ້ໃໝ່) ໃຫ້ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານລັດ-ຖະກອນພາຍໃນສະພາປະຊາຊົນໃຫ້ມີຄວາມເລິກເຊິ່ງ, ຫຼາຍຮູບແບບ, ຫຼາຍວິທີການ ເພື່ອສ້າງຄວາມຮັບຮູ້ທີ່ຖືກຕ້ອງ ແລະ ມີຄວາມເປັນເອກະພາບ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີສະຕິຕໍ່ການຈັດຕັ້ງ, ປະຕິບັດລະບຽບວິໄນຢ່າງເຂັ້ມງວດ, ມີຄວາມຕື່ນຕົວເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ, ມີຄວາມທ່ຽງທຳ, ພາວະວິໄສ, ເດັດຂາດ, ເຂັ້ມງວດໃນການປົກປ້ອງລັດຖະທຳມະນູນ, ກົດໝາຍ, ປົກປ້ອງຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ, ຂອງປະເທດຊາດ ແລະ ຄວາມຍຸຕິທຳໃນສັງຄົມ, ສາມາດຫັນແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ເຂົ້າສູ່ວຽກງານຕົວຈິງຢ່າງປະດິດສ້າງ ແລະ ມີຜົນສຳເລັດ, ຮັກສາມູນເຊື້ອ ແລະ ເພີ່ມທະວີຄວາມສາມັກຄີພາຍໃນ ໃຫ້ມີຄວາມໜັກແໜ້ນ, ເຊີດຊູນ້ຳໃຈຮັກຊາດ, ຮັກລະບອບໃໝ່, ນ້ຳໃຈລວມໝູ່, ຊ່ວຍເຫຼືອເຊິ່ງກັນແລະກັນ ບົນພື້ນຖານຫຼັກການຂອງພັກ, ເດັດດ່ຽວຕ້ານ ແລະ ແກ້ໄຂປັດໃຈຕ່າງໆທີ່ຈະກໍ່ໃຫ້ເກີດຄວາມແຕກແຍກຄວາມສາມັກຄີ; ພ້ອມນັ້ນ, ກໍໃຫ້ເສີມຂະຫຍາຍຄວາມສາມັກຄີພາຍນອກໃຫ້ກວ້າງຂວາງ, ສ້າງເພື່ອນຮ່ວມງານໃຫ້ຫຼາຍຂຶ້ນ ເພື່ອສ້າງແຮງຍູ້ດັນ ແລະ ການສະໜັບສະໜູນຈາກພາຍນອກໃຫ້ນັບມື້ຫຼາຍຂຶ້ນ ເພື່ອຄວາມສະດວກໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານລວມ ແລະວຽກງານສະເພາະຂອງສະພາ ກ້າຕັດສິນບັນຫາ ເອົາໃຈໃສ່ປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມກົມກຽວກັນ; ມີຄວາມສະດຸ້ງໄວຕໍ່ບັນຫາທີ່ເກີດຂຶ້ນ ແລະ ມີວິທີແກ້ໄຂທີ່ຄ່ອງຕົວບົນພື້ນຖານແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ວິຊາສະເພາະຕາມທິດທາງແຜນການ 5 ປີ ຂອງສະພາປະຊາຊົນແຂວງ ໃຫ້ສາມາດບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

## ສະພາປະຊາຊົນແຂວງບໍລິຄຳໄຊ ທາບທາມຄຳເຫັນໃສ່ຮ່າງກົດໝາຍ 9 ສະບັບ

(ສພຊ) - ກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ 9 ສະບັບທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 9-12 ພຶດສະພາ 2024 ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ ໂດຍການເປັນປະທານຂອງທ່ານ ເລື່ອນວິໄລ ຈັນທະລາພັນ ຮອງປະທານສະພາປະຊາຊົນແຂວງບໍລິຄຳໄຊ; ມີຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ພະແນກການທີ່ກ່ຽວຂ້ອງຮ່າງກົດໝາຍເຂົ້າຮ່ວມ.



ການທາບທາມຄັ້ງນີ້, ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ເປັນການປະກອບຄຳຄິດຄຳເຫັນຂອງເປົ້າໝາຍຕ່າງໆໃນສັງຄົມ ເພື່ອນຳໄປຄົ້ນຄວ້າປັບປຸງກົດໝາຍ ເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນແລະຮັບໃຊ້ປະຊາຊົນຢ່າງແທ້ຈິງ ໃນກອງປະຊຸມໄດ້ຮັບຟັງການສະເໜີເຫດຜົນ ແລະຄວາມຈຳເປັນໃນການສ້າງ ແລະປັບປຸງ ໂດຍຜູ້ຕາງໜ້າຈາກພະແນກການ ຂຶ້ນຜ່ານຮ່າງກົດໝາຍ ໂດຍຍົກໃຫ້ເຫັນບັນດາໝວດ, ມາດຕາຕ່າງໆ ຮ່າງກົດໝາຍທີ່ນຳມາສະເໜີຄັ້ງນີ້ມີຈຳນວນ 10 ສະບັບປະກອບມີ: ຮ່າງກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ; ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ; ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດເອັດຈ໌ໄອວີ/ພະຍາດເອດ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສະບັບສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອັກຄີໄພ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການຕ້ານການຟອກເງິນແລະສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ຮ່າງກົດໝາຍວ່າດ້ວຍການສົ່ງເສີມກາລົງທຶນ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ.

ຮ່າງກົດໝາຍເຫຼົ່ານີ້ ລ້ວນແຕ່ມີຄວາມໝາຍ ແລະ ຄວາມສຳຄັນໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງແຕ່ລະຮ່າງກົດໝາຍຢ່າງມີຈຸດສຸມ, ມີຄວາມເລິກເຊິ່ງ ສ້າງໃຫ້ໄດ້ຄວາມເປັນເອກະພາບໃຫ້ແກ່ຄະນະຮັບຜິດຊອບ ນຳໄປຄົ້ນຄ້ວາ, ວິເຄາະວິໄຈ ແລະ ປັບປຸງຮ່າງກົດໝາຍແຕ່ລະສະບັບ ເພື່ອເຮັດໃຫ້ແຕ່ລະກົດໝາຍ ມີເນື້ອໃນຈະແຈ້ງ, ຄົບຖ້ວນ, ຮັດກຸມ ແລະສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບສູງ ແລະ ເປັນບ່ອນອີງໃຫ້ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ນຳປະກອບຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນມໍ່ໆນີ້.

**(ນາງ ໂສລະຢ້າ)**

# ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8 ຢ້ຽມຢາມປະຊາຊົນເຂດລ້ອງແວ່ນ



(ສພຊ) ເມື່ອຕົ້ນພຶດສະພາຜ່ານມາ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອຕັ້ງທີ 8 ພ້ອມດ້ວຍຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຊຳເໜືອ ພ້ອມດ້ວຍທີມງານ ໄດ້ເຄື່ອນໄຫວຢ້ຽມຢາມພົບປະພໍ່ແມ່ປະຊາຊົນ ເຂດລ້ອງແວ່ນ ເມືອງຊຳເໜືອ ແຂວງຫົວພັນ.

ການພົບປະຢ້ຽມຢາມຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບລວມຂອງບັນດາບ້ານຈາກທ່ານນາຍບ້ານແຕ່ລະບ້ານ ພ້ອມທັງຮັບຟັງຄຳຄິດຄຳເຫັນຄຳສະເໜີຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກການຂຸດຄົ້ນແຮ່ທາຍາກ ໃນຂອບເຂດດັ່ງກ່າວ; ຈາກນັ້ນ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຕາງໜ້າຄະນະທີມງານ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພໍ່ແມ່ປະຊາຊົນທີ່ມີຄວາມດຸໝັ່ນຂະຫຍັນພຽນ ແລະ ມີຄວາມສາມັກຄີເປັນປຶກແຜ່ນ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ພັດທະນາເສດຖະກິດຄອບຄົວກໍຄືພາຍໃນບ້ານໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ສ່ວນຄຳຄິດຄຳເຫັນແລະຄຳສະເໜີຕ່າງໆຈະນຳເອົາໄປປຶກສາຫາລືນຳພາກສ່ວນທີ່ກ່ຽວຂ້ອງເພື່ອຊອກຫາທາງອອກ ແລະ ຊອກຫາວິທີແກ້ໄຂໃຫ້ດີຂຶ້ນ

ໂອກາດດຽວກັນນີ້, ທີມງານຍັງໄດ້ນຳເອົາອຸປະກອນທາງການແພດມອບໃຫ້ໂຮງໝໍນ້ອຍເຂດບ້ານເມືອງແວ່ນຕື່ມອີກ.



# ເຊື່ອມຊຶມມະຕິກອງປະຊຸມວຽກງານ ປກຊ-ປກສ 4 ແຂວງພາກໃຕ້




(ສພຊ) - ເພື່ອເຮັດໃຫ້ພະນັກງານ-ລັດຖະກອນພາຍໃນແຂວງ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງກວ້າງຂວາງ ຕໍ່ພາລະບົດບາດ, ຜົນງານຂອງວຽກງານງານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ແລະ ການມີສ່ວນຮ່ວມຂອງທົ່ວທຸກຂົງເຂດຢ່າງເປັນເຈົ້າການ; ໃນວັນທີ 7 ພຶດສະພາຜ່ານມາ, ພະນັກງານ-ລັດຖະກອນຂົງເຂດປົກປ້ອງກົດໝາຍ ແລະຂົງເຂດເສດຖະກິດ ໄດ້ຮັບການເຊື່ອມຊຶມເຜີຍແຜ່ຜົນສຳເລັດຂອງກອງປະຊຸມວຽກງານ ປກຊ-ປກສ 4 ແຂວງພາກໃຕ້ (ເຊກອງ, ສາລະວັນ, ອັດຕະປື, ຈຳປາສັກ ແລະ ກອງພົນທີ 5) ປະຈຳປີ 2023 ແລະ ທິດທາງແຜນການວຽກງານຈຸດສຸມ ປີ 2024ແລະຕີລາຄາການຈັດຕັ້ງປະຕິບັດວຽກງານ ປກຊ-ປກສ ປະຈຳປີ 2023 ແລະ ວາງທິດທາງແຜນການປະຈຳປີ 2024 ຂອງແຂວງ ໂດຍການເປັນປະທານກອງປະຊຸມຂອງທ່ານສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງສາລະວັນ, ຮອງປະທານຄະນະກຳມະການ ປກຊ-ປກສ ແຂວງ; ເຂົ້າຮ່ວມມີຫົວໜ້າຫ້ອງການປກຊ-ປກສແຂວງ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າລັດຂັ້ນແຂວງ ຕະຫຼອດຮອດພະນັກງານພາຍໃນສອງຂົງເຂດດັ່ງກ່າວເຂົ້າຮ່ວມຮັບຟັງທັງໝົດ 170 ກວ່າທ່ານ.

ວາລະຂອງກອງປະຊຸມ, ທ່ານ ພັອ. ເຄນຄຳ ວໍລະຈິດ ຫົວໜ້າຫ້ອງການ ປກຊ-ປກສ ແຂວງ ໄດ້ຂຶ້ນເຜີຍແຜ່ເນື້ອໃນສຳຄັນຂອງກອງປະຊຸມວຽກງານ ປກຊ-ປກສ 4 ແຂວງພາກໃຕ້ (ເຊກອງ, ສາລະວັນ, ອັດຕະປື, ຈຳປາສັກ ແລະ ກອງພົນທີ 5) ປະຈຳປີ 2023 ແລະ ທິດທາງແຜນການວຽກງານຈຸດສຸມ ປີ 2024ແລະຕີລາຄາການຈັດຕັ້ງປະຕິບັດວຽກງານ ປກຊ-ປກສ ປະຈຳປີ 2023 ແລະ ວາງທິດທາງແຜນການປະຈຳປີ 2024 ຂອງແຂວງ; ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມລົງເລິກບາງບັນຫາ ເພື່ອໃຫ້ຜູ້ທີ່ເຂົ້າຮ່ວມຮັບຟັງໄດ້ແລກປ່ຽນສົນທະນາ ແລະ ປະກອບຄຳຄິດເຫັນຕໍ່ວຽກງານ ປກຊ-ປກສ ແນໃສ່ປັບປຸງຂອດການເຄື່ອນໄຫວວຽກງານຂອງປກຊ-ປກສ ໃຫ້ຄ່ອງຕົວດີຂຶ້ນກວ່າເກົ່າ.

ພ້ອມນີ້, ທ່ານ ສີເຮັງ ຫອມສົມບັດ ໄດ້ມີຄຳເຫັນໃນຕອນທ້າຍວ່າ: ເພື່ອເປັນການປະຕິບັດຕໍ່ມະຕິຂອງກອງປະຊຸມວຽກງານ ປກຊ-ປກສ 4 ແຂວງພາກໃຕ້ໃຫ້ກວ້າງຂວາງແຜ່ຫຼາຍທຸກພາກສ່ວນ ທຸກຂັ້ນຕ້ອງໄດ້ເພີ່ມທະວີ ຜັນຂະຫຍາຍເຜີຍແຜ່ແນະນຳເນື້ອໃນສຳຄັນຕ່າງໆທີ່ລະບຸໄວ້ ໃຫ້ຮັບຮູ້ ແລະ ເຂົ້າໃຈແຈ້ງຢ່າງເລິກເຊິ່ງ ເພາະເປັນວຽກຂອງໝົດທຸກຄົນ;ປະສານສົມທົບທັນເອົາກຳລັງຂອງຕົນລົງສູ່ຮາກຖານຂັ້ນບ້ານ ເພື່ອຊຸກຍູ້ຂະບວນການຕ່າງໆ ກະກຽມກອງປະຊຸມສາມຂັ້ນຂອງພັກໃຫ້ເປັນຂະບວນກວ້າງຂວາງ; ເອົາໃຈໃສ່ປັບປຸງກົມກອງ ສ້າງພາລາທິການກັບທີ່ມີກອງທຶນເພື່ອຊ່ວຍເຫຼືອແກ້ໄຂເມື່ອມີເຫດການສຸກເສີນ ແລະ ທຸກພາກສ່ວນຕ້ອງທັນທຸກຂົງເຂດວຽກງານໃຫ້ເຂົ້າສູ່ດີຈິຕອນທັນສະໄໝ ຕາມແນວທາງນະໂຍບາຍຂອງພັກ-ລັດ ໂດຍການນຳໃຊ້ເຄື່ອງມືລະບົບທີ່ທັນສະໄໝເຂົ້າໃນວຽກງານ ເພື່ອສົ່ງຂໍ້ມູນລາຍງານໄດ້ຢ່າງວ່ອງໄວ, ທຸກສຳນັກງານຫ້ອງການ ຖ້າມີເງື່ອນໄຂຄວນຕິດກ້ອງວົງຈອນ ເພື່ອເຝົ້າລະວັງກຸ່ມຄົນບໍ່ຫວັງດີ ແລະ ເປັນຫຼັກຖານໜຶ່ງໃຫ້ເຈົ້າໜ້າທີ່ປະກອບເຂົ້າໃນການຕັດສິນຄະດີໄດ້ຢ່າງຖືກຕ້ອງເປັນທຳ ແລະ ເຮັດໃຫ້ສັງຄົມມີຄວາມມີຄວາມສະຫງົບແລະເຄົາລົບກົດໝາຍ.

**(ດີລຳພົນ ພົມມະຈັນ)**




# ສຳເລັດທາບທາມຮ່າງກົດໝາຍ 5 ສະບັບ ທີ່ແຂວງອັດຕະປື



(ສພຊ) - ໂດຍປະຕິບັດຕາມຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດກ່ຽວກັບການທາບທາມໃສ່ຮ່າງກົດໝາຍ ແລະ ກົດໝາຍວ່າດ້ວຍການສ້າງນິຕິກຳ, ຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍມີຄວາມຄົບຖ້ວນ, ຮັດກຸມ, ຈະແຈ້ງ ແລະ ສອດຄອງກັບສະພາບຕົວຈິງ, ເພື່ອເປັນບ່ອນອີງທີ່ຈະນຳເຂົ້າຄົ້ນຄວ້າ ພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX.

ໃນວັນທີ 2 ພຶດສະພາ 2024 ສະພາປະຊາຊົນແຂວງອັດຕະປື ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍຈຳນວນ 5 ສະບັບທີ່ຫ້ອງປະຊຸມຂອງຕົນ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ; ມີບັນດາທ່ານຮອງປະທານສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ, ຕາງໜ້າອົງການກວດກາລັດ, ພະແນກກະສິກຳ ແລະ ປ່າໄມ້, ພະແນກສາທາລະນະສຸກ, ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ພ້ອມດ້ວຍພະນັກງານວິຊາການເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ກ່າວວ່າ: ຮ່າງກົດໝາຍທີ່ນຳເຂົ້າທາບທາມໃນຄັ້ງນີ້ ມີຮ່າງກົດໝາຍທີ່ປັບປຸງໃໝ່ ຈຳນວນ 3 ສະບັບ: ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມແລະກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ, ຮ່າງກົດໝາຍທີ່ສ້າງໃໝ່ ມີຈຳນວນ 2 ສະບັບ: ກົດໝາຍວ່າດ້ວຍສະຫະກອນ ແລະກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ສະນັ້ນ, ການສ້າງ ແລະ ປັບປຸງກົດໝາຍແມ່ນມີຄວາມສຳຄັນຫຼາຍ ຕໍ່ກັບການພັດທະນາເສດຖະກິດ-ສັງຄົມ, ການປົກປ້ອງສິດ ແລະຜົນປະໂຫຍດຂອງລັດ ລວມໝູ່ແລະປະຊາຊົນທັງເປັນເຄື່ອງມືຂອງລັດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ.

ໃນກອງປະຊຸມ, ຜູ້ຕາງໜ້າຈາກພະແນກການຂຶ້ນຜ່ານຮ່າງກົດໝາຍທັງ 5 ສະບັບດັ່ງກ່າວ ແລະ ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າປະກອບຄວາມຄິດຄວາມເຫັນໃສ່ບັນດາມາດຕາ ແລະ ເນື້ອໃນຂອງຮ່າງກົດໝາຍ ເພື່ອໃຫ້ມີເນື້ອໃນເລິກເຊິ່ງ, ຮັດກຸມ, ຈະແຈ້ງ ແລະ ເຂົ້າໃຈງ່າຍ ເມື່ອໄດ້ຮັບຮອງ ແລະ ປະກາດໃຊ້ ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິພາບແລະປະສິດທິຜົນ.

**(ວິນັດ ສີສຸລາດ)**

## ສຳມະນາຂັ້ນຕອນການສ້າງ, ຕິດຕາມກວດກາ ແລະ ປະເມີນ ຜົນການປະຕິບັດນິຕິກຳໃຕ້ກົດໝາຍ ທີ່ນະຄອນຫຼວງວຽງຈັນ



(ສພຊ) - ກອງປະຊຸມສຳມະນາກ່ຽວກັບຂັ້ນຕອນການສ້າງ, ການຕິດຕາມກວດກາ ແລະ ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງວຽງຈັນ ແລະ ພະແນກການທີ່ກ່ຽວຂ້ອງ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 8-9 ພຶດສະພາຜ່ານມາ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ລຳໄມ ກູດລາວົງຮອງປະທານສະພາປະຊາຊົນແຂວງວຽງຈັນ; ມີບັນດາປະທານ-ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 11 ເມືອງ, ພະແນກການທີ່ກ່ຽວຂ້ອງ, ຄະນະຮັບຜິດຊອບກອງປະຊຸມ ແລະ ນັກວິທະຍາກອນຈາກກະຊວງຍຸຕິທຳ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອເປັນການສົ່ງເສີມທັກສະທາງດ້ານວິຊາການ, ຍົກລະດັບຄວາມຮູ້, ຄວາມເຂົ້າໃຈ ແລະ ແລກປ່ຽນບົດຮຽນໃນຂັ້ນຕອນການສ້າງ, ການຕິດຕາມກວດກາ ແລະ ການປະເມີນຜົນການຈັດຕັ້ງປະຕິບັດ ນິຕິກຳໃຕ້ກົດໝາຍ ເພື່ອເປັນເຄື່ອງມືຮັບໃຊ້ໃນການຈັດຕັ້ງປະຕິບັດວຽກງານ ໃນຂົງເຂດຮັບຜິດຊອບ, ໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍຂອງຂັ້ນເທິງ ແນໃສ່ປົກປັກຮັກສາຜົນປະໂຫຍດລວມ ຂອງລັດ, ຂອງປະຊາຊົນ.

ກອງປະຊຸມໄດ້ຍົກໃຫ້ເຫັນຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ແລະ ໄດ້ສະເໜີບັນດາທິດທາງໃນການແກ້ໄຂບັນຫາທີ່ຍັງຄົງຄ້າງ, ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວໄດ້ປະຕິບັດຕາມແຜນການ ແລະ ບັນລຸຕາມຈຸດປະສົງ, ລະດັບຄາດໝາຍທີ່ວາງໄວ້ ເຊິ່ງຜູ້ເຂົ້າຮ່ວມກອງປະຊຸມໄດ້ພະຍາຍາມຖອດຖອນບົດຮຽນຈາກການຈັດຕັ້ງປະຕິບັດ, ຈາກການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍທີ່ຜ່ານມາ ໃຫ້ມີຄວາມລະອຽດຈະແຈ້ງແລະດີຂຶ້ນເທື່ອລະກ້າວ.

ກອງປະຊຸມສຳມະນາຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື (STEPs).

## ແລກປ່ຽນບົດຮຽນລະຫວ່າງ ສພຂ ສະຫວັນນະເຂດ ແລະ ຈຳປາສັກ

(ສພຊ) - ໃນລະຫວ່າງວັນ 9-10 ພຶດສະພາ 2024 ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ນຳໂດຍທ່ານ ຄຳຜັນ ຄູນສະຫວັນ ຮອງປະທານ ສພຂ ສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການມາຢ້ຽມຢາມຂອງຄະນະຜູ້ແທນ ສພຂ ຈຳປາສັກ ນຳໂດຍທ່ານ ສົມສີ ມະນີນິນ ຮອງປະທານ ສພຂ ຈຳປາສັກ ທີ່ໄດ້ເດີນທາງມາພົບປະຢ້ຽມຢາມ ແລະ ແລກປ່ຽນບົດຮຽນທີ່ແຂວງສະຫວັນນະເຂດ ເຊິ່ງກອງປະຊຸມພົບປະແລກປ່ຽນບົດຮຽນລະຫວ່າງ ສພຂ 2 ແຂວງ ໄດ້ຈັດຂຶ້ນທີ່ຫ້ອງປະຊຸມ ສພຂ ສະຫວັນນະເຂດ ໂດຍມີບັນດາທ່ານ ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງການຂອງສອງຝ່າຍເຂົ້າຮ່ວມ.

ວາລະດຳເນີນກອງປະຊຸມໄດ້ມີບັນຍາກາດທີ່ເຕັມໄປດ້ວຍໄມຕີຈິດມິດຕະພາບແລະຄວາມຮັກແພງສາມັກຄີ, ຄະນະຜູ້ແທນສະພາປະຊາຊົນສອງແຂວງ ມີການລາຍງານການເຄື່ອນໄຫວວຽກງານຂອງ ສພຂ ໃນໄລຍະຜ່ານມາຂອງກັນແລະກັນ ພ້ອມທັງໄດ້ມີຄຳເຫັນແລກປ່ຽນບົດຮຽນເຊິ່ງກັນແລະກັນ ໂດຍສະເພາະການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງ ສພຂ ຄື: ດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງຜ່ານກອງປະຊຸມ ສພຂ ແລະກອງປະຊຸມຄະນະປະຈຳ ສພຂ ເປັນຕົ້ນແມ່ນການອອກມະຕິສະເພາະຂອງເມືອງ, ພະແນກການ ແລະ ດ້ານການຕິດຕາມກວດກາ; ວຽກງານປະສານສົມທົບກັບອົງການປົກຄອງແຂວງ ແລະ ພາກສ່ວນກ່ຽວຂ້ອງ; ການດຳເນີນກອງປະຊຸມ ສພຂ; ແລກປ່ຽນບົດຮຽນໃນຫົວຂໍ້ອື່ນ ກ່ຽວກັບບັນຫາທີ່ພົບເຫັນເວລາເຄື່ອນໄຫວພົບປະພໍ່ແມ່ປະຊາຊົນຜູ້ທີ່ມີສິດເລືອກຕັ້ງ; ຕາມການເຈາະຈີ້ມ ແລະ ຂົງເຂດອື່ນໆທີ່ສອງຝ່າຍໃຫ້ຄວາມສົນໃຈ.

ໃນຕອນທ້າຍ, ທັງສອງຝ່າຍຍັງໄດ້ເປັນເອກະພາບກັນສືບຕໍ່ເພີ່ມທະວີການພົວພັນຮ່ວມມື, ການແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນໃນການເຄື່ອນໄຫວວຽກງານຂອງ ສພຂ ສອງແຂວງໃຫ້ນັບມື້ສະໜິດແໜ້ນ ແລະ ກ້າວຂຶ້ນສູ່ລະດັບສູງ; ສືບຕໍ່ພົບປະແລກປ່ຽນບົດຮຽນລະຫວ່າງຄະນະຜູ້ແທນຂອງ ສພຂ ໂດຍການຜັດປ່ຽນຢ້ຽມຢາມເຊິ່ງກັນແລະກັນຕື່ມອີກ.

TE SOLE

## ສພຂ ອັດຕະປື ສຳເລັດການເຝິກອົບຮົມ ໃຫ້ ສສຂ ແລະ ພະນັກງານ-ລັດຖະກອນ



(ສພຊ) - ກອງປະຊຸມເຝິກອົບຮົມກ່ຽວກັບການບຳລຸງຮັກສາອຸປະກອນໄອທີ, ການຄຸ້ມຄອງເຄື່ອງໃຊ້ຫ້ອງການ, ການຄຸ້ມຄອງເອກະສານຜ່ານປະຕູດຽວ, ການຮ່າງເອກະສານທາງການ, ວິທີນຳໃຊ້ລະບົບເຄືອຂ່າຍພາຍໃນ ສພຊ ແລະ ການກະກຽມວຽກງານບໍລິຫານ-ພິທີການໃຫ້ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງ(ສພຂ)ແຂວງອັດຕະປື ໄດ້ມີຂຶ້ນ ແລະ ສຳເລັດລົງຕາມລະດັບຄາດໝາຍທີ່ວາງໄວ້ ໃນວັນທີ 9-10 ພຶດສະພາ 2024 ທີ່ຫ້ອງປະຊຸມ ສພຂ ອັດຕະປື ພາຍໃຕ້ການເປັນປະທານກອງປະຊຸມຂອງທ່ານ ສຸກສຳລານ ໄຊຍະແສງ ຮອງປະທານ ສພຂ ອັດຕະປື; ມີບັນດາທ່ານຄະນະກຳມະການ, ຄະນະເລຂາທິການ, ວິທະຍາກອນທີ່ມາຈາກສູນກາງ ແລະ ທ້ອງຖິ່ນ, ສຳມະນາກອນທີ່ເປັນ ສສຂ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ພ້ອມດ້ວຍແຂກທີ່ຖືກເຊີນເຂົ້າຮ່ວມ.

ຕະຫຼອດໄລຍະກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງ, ຄົ້ນຄວ້າສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເປັນຕົ້ນແມ່ນບົດຮຽນການຄຸ້ມຄອງເອກະສານ ແລະ ການຈໍລະຈອນເອກະສານຜ່ານປະຕູດຽວ, ການກະກຽມດ້ານວຽກງານບໍລິຫານ-ພິທີການ, ການຄຸ້ມຄອງເຄື່ອງໃຊ້ຫ້ອງການ ແລະ ອຸປະກອນໄອທີ, ການສ້າງເອກະສານທາງການ ແລະ ການນຳໃຊ້ເຄືອຂ່າຍພາຍໃນສະພາແຫ່ງຊາດ.

ກອງປະຊຸມເຝິກອົບຮົມໃນຄັ້ງນີ້ ເຫັນໄດ້ວ່າສຳມະນາກອນແມ່ນໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈ ເຊິ່ງສະແດງອອກດ້ວຍການເອົາໃຈໃສ່ແລກປ່ຽນສົນທະນາ ຕໍ່ເນື້ອໃນບົດຮຽນທີ່ໄດ້ສະເໜີມານັ້ນດ້ວຍຄວາມເປັນເອກະພາບສູງ, ສາມາດກຳແໜ້ນດ້ານເນື້ອໃນບັນດາບົດຮຽນຕ່າງໆທີ່ໄດ້ຮ່ຳຮຽນ ແລະ ສາມາດນຳໄປໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຕົວຈິງຂອງຕົນ, ສາມາດຮັບປະກັນໄດ້ໃນການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງໃຫ້ນັບມື້ນັບເຂັ້ມແຂງ ແລະ ເປັນມືອາຊີບຂຶ້ນໄປເລື້ອຍ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນໂດຍໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPs).

**(ຂ່າວ: ວິນັດ ສີສຸລາດ
ພາບ: ຈັນທະຈອນ ໂກພິຈິດ)**

## ຖອດຖອນບົດຮຽນການຈັດຕັ້ງປະຕິບັດເນື້ອໃນ ຂໍ້ຕົກລົງຮ່ວມລະຫວ່າງແນວລາວສ້າງຊາດ ແລະ ສພຂ ອຸດົມໄຊ



(ສພຊ) - ກອງປະຊຸມສະຫຼຸບຖອດຖອນບົດຮຽນການຈັດຕັ້ງປະຕິບັດເນື້ອໃນຂໍ້ຕົກລົງຮ່ວມລະຫວ່າງຄະນະປະຈຳແນວລາວສ້າງຊາດແຂວງອຸດົມໄຊ ກັບຄະນະປະຈຳສະພາປະຊາຊົນແຂວງອຸດົມໄຊ ໄດ້ມີຂຶ້ນຕອນບ່າຍຂອງວັນທີ 3 ພຶດສະພາ 2024 ຢູ່ທີ່ຫ້ອງປະຊຸມ 4 ອົງການຈັດຕັ້ງມະຫາຊົນແຂວງອຸດົມໄຊ ເຊິ່ງຝ່າຍແນວລາວສ້າງຊາດແຂວງ ນຳໂດຍທ່ານ ວັນນາ ແກ້ວສັນຕິ ປະທານແນວລາວສ້າງຊາດແຂວງ ແລະ ຝ່າຍສະພາປະຊາຊົນແຂວງ ນຳໂດຍທ່ານນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະປະຈຳແນວລາວສ້າງຊາດແຂວງ, ຄະນະປະຈຳສະພາປະຊາຊົນ, ຫົວໜ້າຂະແໜງ ແລະ ພະນັກງານຂະແໜງກ່ຽວຂ້ອງຂອງ 2 ພາກສ່ວນເຂົ້າຮ່ວມ.

ຄະນະຮັບຜິດຊອບໄດ້ຜ່ານຮ່າງບົດສະຫຼຸບຖອດຖອນບົດຮຽນການຈັດຕັ້ງປະຕິບັດເນື້ອໃນຂໍ້ຕົກລົງຮ່ວມ ລະຫວ່າງຄະນະປະຈຳແນວລາວສ້າງຊາດແຂວງ ກັບຄະນະປະຈຳສະພາປະຊາຊົນແຂວງ ເຊິ່ງຂໍ້ຕົກລົງຮ່ວມດັ່ງກ່າວ ປະກອບມີ 5 ໝວດ, 20 ມາດຕາ ແລະ ໄດ້ລົງລາຍເຊັນໃນວັນທີ 20 ພຶດສະພາ 2022 ໂດຍທັງ 2 ພາກສ່ວນຮ່ວມກັນຈັດຕັ້ງປະຕິບັດໄດ້ເປັນເວລາເກືອບ 2 ປີ, ຜ່ານການເຄື່ອນໄຫວເຫັນວ່າທັງ 2 ພາກສ່ວນໄດ້ຕັ້ງໜ້າຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ແລະ ມີຜົນສຳເລັດໃນຫຼາຍໆດ້ານ; ພ້ອມນັ້ນ, ໄດ້ວາງທິດທາງແຜນການເຄື່ອນໄຫວປະຈຳປີ 2024 ຕື່ມອີກ.

ຫຼັງຈາກນັ້ນ, ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວຈັດຕັ້ງປະຕິບັດຂໍ້ຕົກລົງຮ່ວມວ່າດ້ວຍການພົວພັນລະຫວ່າງຄະນະປະຈຳສະພາປະຊາຊົນແຂວງ ກັບຄະນະປະຈຳແນວລາວສ້າງຊາດແຂວງ ຢ່າງເລິກເຊິ່ງ, ກົງໄປກົງມາ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນ ແລະ ສາມາດນຳໄປຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດດີຂຶ້ນກວ່າເກົ່າ.



## ທາບທາມ...

(ຕໍ່ຈາກໜ້າ 1)

ແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານຮອງປະທານ ສພຊ, ອະດີດຮອງປະທານ ສພຊ ຊຸດທີ VIII, ປະທານ-ຮອງປະທານກຳມາທິການພາຍໃນ ສພຊ ແລະ ຕາງໜ້າຈາກກະຊວງ, ອົງການຈັດຕັ້ງພັກ-ລັດຂັ້ນສູນກາງ ພ້ອມທັງແຂກຖືກເຊີນ ເຂົ້າຮ່ວມຈຳນວນຫຼາຍ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວເປີດໂດຍໄດ້ເນັ້ນໜັກເຖິງຄວາມສຳຄັນຂອງສາມກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ. ໃນໄລຍະຜ່ານມາ ກົດໝາຍ 3 ສະບັບນີ້, ນັບແຕ່ວັນຮັບຮອງສະບັບທຳອິດເປັນຕົ້ນມາ ກໍໄດ້ຮັບການປັບປຸງເປັນແຕ່ລະໄລຍະມາຫຼາຍຄັ້ງແລ້ວ, ການປັບປຸງແຕ່ລະຄັ້ງກໍໄດ້ເປັນບ່ອນອີງສຳຄັນແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ນັບມື້ດີຂຶ້ນ; ເຖິງຢ່າງໃດກໍຕາມ, ການປັບປຸງໄລຍະຜ່ານມາກໍບໍ່ທັນໄດ້ປະຕິບັດສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ໂດຍສະເພາະຂັ້ນຕອນການຈັດຕັ້ງປະຕິບັດ ແລະ ທາບທາມກົດໝາຍ ບໍ່ທັນເຮັດຢ່າງກວ້າງຂວາງ ເຮັດໃຫ້ມີບາງເນື້ອໃນບໍ່ທັນຮັດກຸມ ຊັດເຈນ ຈະແຈ້ງ ຈຶ່ງເຮັດໃຫ້ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນບາງດ້ານບໍ່ທັນມີຄຸນນະພາບເທົ່າທີ່ຄວນ.

ໃນກອງປະຊຸມ ຜູ້ແທນເຂົ້າຮ່ວມໄດ້ຮັບຟັງບົດລາຍງານຈາກຄະນະຮັບຜິດຊອບປັບປຸງກົດໝາຍ ກ່ຽວກັບການປັບປຸງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງຕາມລຳດັບ. ຈາກນັ້ນ, ບັນດາຜູ້ແທນເຂົ້າຮ່ວມ ໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງ 3 ຮ່າງກົດໝາຍຢ່າງມີຈຸດສຸມເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ວິເຄາະວິໄຈປັບປຸງກົດໝາຍແຕ່ລະສະບັບເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມແລະສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

**(ສອນສັກ ວັນວິໄຊ)**

# ອົບຮົມຄວາມຮູ້ ແລະ ຄວາມເຂົ້າໃຈຕໍ່ແນວທາງ ນະໂຍບາຍຂອງລັດຕໍ່ວຽກງານຊົນເຜົ່າ-ສາສະໜາ




(ສພຊ) - ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດພາລະບົດບາດໃນການເຄື່ອນໄຫວວຽກງານຊົນເຜົ່າ-ສາສະໜາໃຫ້ສອດຄ່ອງ, ຖືກຕ້ອງ, ຕາມລັດຖະທຳມະນູນແລະກົດໝາຍ. ໃນວັນທີ9-10ພຶດສະພາ2024 ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຈັດກອງປະຊຸມເຝິກອົບຮົມກ່ຽວກັບຄວາມຮູ້ ແລະ ຄວາມເຂົ້າໃຈຕໍ່ແນວທາງນະໂຍບາຍຂອງລັດຕໍ່ວຽກງານເຜົ່າ-ສາສະໜາ ທີ່ຫ້ອງປະຊຸມຊັ້ນ2 ຂອງເມືອງສິງ ແຂວງຫຼວງນ້ຳທາ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ; ເຂົ້າຮ່ວມມີທ່ານ ນາງ ເກສອນ ແສງຍະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ, ມີສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ 5 ເມືອງ, ແນວລາວສ້າງຊາດແຂວງ-ເມືອງ, ພະແນກພາຍໃນແຂວງ-ເມືອງ ພ້ອມດ້ວຍແຂກຖືກເຊີນ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ 30 ກວ່າທ່ານ.

ໃນວາລະກອງປະຊຸມ, ທ່ານ ຄຳຟອງ ອິນມານີ ໄດ້ກ່າວເປີດກອງປະຊຸມ ເຊິ່ງທ່ານໃຫ້ຮູ້ເຖິງຄວາມໝາຍ, ຄວາມສຳຄັນຂອງວຽກງານຊົນເຜົ່າ ແລະ ສາສະໜາ ພ້ອມທັງຮຽກຮ້ອງໃຫ້ສຳມະນາກອນ ຈົ່ງພ້ອມກັນສຸມໃສ່ເຊື່ອມຊຶມ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ກ່ຽວກັບວຽກງານເຜົ່າ-ສາສະໜາ, ການປະຕິບັດພາລະບົດບາດ, ໜ້າທີ່ຂອງສະພາປະຊາຊົນແຂວງ, ແນວລາວສ້າງຊາດແຂວງ, ພະແນກພາຍໃນແຂວງຕໍ່ວຽກງານເຜົ່າ-ສາສະໜາເພື່ອຍົກສູງຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານເຜົ່າ-ສາສະໜາ ຢູ່ບັນດາເມືອງພາຍໃນແຂວງ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ມີຄຸນນະພາບຂຶ້ນກວ່າເກົ່າ; ພ້ອມດຽວກັນ, ວິທະຍາກອນມາຈາກສະພາປະຊາຊົນແຂວງ, ແນວລາວສ້າງຊາດແຂວງ ແລະ ພະແນກພາຍໃນແຂວງ ໄດ້ຜັດປ່ຽນກັນຂຶ້ນບັນລະຍາຍເອກະສານ ເປັນຕົ້ນໃນຫົວຂໍ້: ແນວທາງຂອງພັກ-ນະໂຍບາຍຂອງລັດຕໍ່ວຽກງານຊົນເຜົ່າ ແລະ ສາສະໜາ; ການປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງແນວລາວສ້າງຊາດແຂວງຕໍ່ວຽກງານຊົນເຜົ່າ ແລະ ສາສະໜາ; ການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງພະແນກພາຍໃນແຂວງຕໍ່ກັບການຄຸ້ມຄອງວຽກງານຊົນເຜົ່າ ແລະ ສາສະໜາ; ການຕິດຕາມການຈັດຕັ້ງປະຕິບັດວຽກງານຊົນເຜົ່າ ແລະ ສາສະໜາ; ນອກນັ້ນ, ສຳມະນາກອນຍັງໄດ້ແລກປ່ຽນປະກອບຄຳຄິດເຫັນຢ່າງມີຈຸດສຸມຕໍ່ບັນດາເອກະສານໃນວຽກງານຊົນເຜົ່າ, ສາສະໜາເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງວຽກເຜົ່າ, ສາສະໜາ ພາຍໃນແຂວງ, ເມືອງ ໃຫ້ດີຂຶ້ນເທື່ອລະກ້າວ.

ການເຝິກອົບຮົມຄັ້ງນີ້ແມ່ນທຶນຊ່ວຍເຫຼືອລ້າຈາກໂຄງການສະເຕັບສ໌ (STEPs).



## ກະກຽມ...

(ຕໍ່ຈາກໜ້າ 1)

ກອບຄຳຄິດຄຳເຫັນ, ຖອດຖອນບົດຮຽນເຊິ່ງກັນແລະກັນ, ແລະແນະນຳການກະກຽມແຕ່ລະດ້ານ.

ເຂົ້າຮ່ວມກອງປະຊຸມຄັ້ງນີ້ ມີບັນດາທ່ານຫົວໜ້າ, ຮອງຫົວໜ້າອະນຸກຳມະການ ພ້ອມດ້ວຍຄະນະ ແລະ ກອງເລຂາຊ່ວຍວຽກທີ່ຮັບຜິດຊອບຢູ່ໃນ 8 ອະນຸກຳມະການຄື: ເນື້ອໃນ; ບໍລິຫານ, ພິທີການ, ສະຖານທີ່, ພາຫະນະ ແລະ ປະດັບປະດາ; ເຜີຍແຜ່ວັດທະນະທຳ, ສິລະປະ ແລະ ທ່ອງທ່ຽວ; ເຕັກໂນໂລຊີ-ຂໍ້ມູນຂ່າວສານ ແລະ ສື່ມວນຊົນ; ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ງົບປະມານ; ສຸຂະພາບ; ຂະບວນການ, ຂົນຂວາຍ ແລະ ຍ້ອງຍໍ.

ໃນຕອນສວາຍຂອງວັນພຸດທີ 15 ພຶດສະພາ, ກໍໄດ້ມີການຈັດກອງປະຊຸມຜ່ານການອອກແບບໂລໂກ(Logo)ກອງປະຊຸມໃຫຍ່ໄອປາ-45ພາຍໃຕ້ການເປັນປະທານຂອງທ່ານ ສັນຍາ ປຣະເສີດ ໂດຍມີບັນດາທ່ານຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ການອອກແບບໂລໂກພາຍໃຕ້ຂອບເນື້ອໃນຕ້ອງສະແດງໃຫ້ເຫັນສັນຕິພາບ ແລະ ຄວາມໝັ້ນຄົງຂອງພາກພື້ນຂອງອາຊຽນ; ຄວາມມີວຸດທິພາວະ ແລະ ຄວາມເຂັ້ມແຂງຂອງອາຊຽນ; ຄວາມກ້າຫານ, ຊົງກຽດ ແລະຄວາມມຸ່ງໝັ້ນຂອງອາຊຽນ; ຄວາມເປັນມິດ ແລະ ຄວາມວັດທະນາຖາວອນຂອງອາຊຽນ; ການເຊື່ອມໂຍງ-ເຊື່ອມຈອດທາງດ້ານເສດຖະກິດ ແລະ ການໄປມາຫາສູ່ຂອງປະຊາຊົນພາຍໃນຊາດອາຊຽນ ແລະ ຄວາມເປັນເອກະລັກຂອງຊາດລາວ ໃນຖານະເປັນປະທານໄອປາ ຄັ້ງທີ 45. ສຳລັບຮູບແບບນັ້ນ ຕ້ອງເປັນວົງມົນ; ມີສັນຍະລັກຂອງຊາດລາວ; ມີໂລໂກຂອງໄອປາ ແລະ ມີສີຟ້າອ່ອນ, ສີຟ້າເຂັ້ມ, ສີແດງ ແລະ ສີຄຳ.

ການອອກແບບໃນຄັ້ງນີ້ ຖ້າຫາກຜ່ານການຄັດເລືອກຈະໄດ້ຮັບລາງວັນເປັນເງິນສົດ 10 ລ້ານກີບ ເຊິ່ງມີ 5 ພາກສ່ວນສະໝັກເຂົ້າຮ່ວມແຂ່ງຂັນການອອກແບບໂລໂກດັ່ງກ່າວປະກອບມີ: ທ່ານ ສອນໄຊ ແກ້ວມະນີໂຄດ, ທ່ານ ເກດສະໜາ ຈັນທະລາດ, ທ່ານ ທະນູສອນ ບັນນະວົງ, ບໍລິສັດ ໂຊກປັນຍາ ແລະ ທ່ານ ນາງ ສອນປະດິດ ເມືອງປາກ.

**(ສອນສັກ ວັນວິໄຊ)**

## ມອບ-ຮັບ...

(ຕໍ່ຈາກໜ້າ 1)

ນະເລຂາທິການສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ, ຮອງປະທານກຳມາທິການ, ຮອງເລຂາທິການ ແລະ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ບັນດາທ່ານຮອງຫົວໜ້າຫ້ອງວ່າການສູນກາງພັກ ແລະ ຜູ້ຕາງໜ້າຂອງຄະນະຈັດຕັ້ງສູນກາງພັກ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ ແລະ ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ພ້ອມດ້ວຍຄະນະກົມ, ສູນ ແລະ ຫ້ອງການ ທີ່ຂຶ້ນກັບສະພາແຫ່ງຊາດ.

ໃນພິທີ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ (ຜູ້ເກົ່າ) ໄດ້ລາຍງານໂດຍສັງເຂບການປະຕິບັດໜ້າທີ່ຂອງຕົນໃນໄລຍະຜ່ານມາ ແລະ ຄາດຄະເນທິດທາງແຜນການຮອດປີ 2025; ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ (ຜູ້ໃໝ່) ໄດ້ກ່າວຮັບໜ້າທີ່ແລະໃຫ້ຄຳໝັ້ນໝາຍຈະຈັດຕັ້ງປະຕິບັດໜ້າທີ່ຢ່າງຕັ້ງໜ້າ ແລະ ດ້ວຍຄວາມຮັບຜິດຊອບສູງ. ຫຼັງຈາກນັ້ນ, ກໍໄດ້ມີພິທີລົງນາມເອກະສານມອບ-ຮັບໜ້າທີ່ລະຫວ່າງເລຂາທິການສະພາແຫ່ງຊາດ ຜູ້ເກົ່າ ກັບ ຜູ້ໃໝ່ ໂດຍການຮ່ວມເປັນສັກຂີພະຍານຈາກທ່ານຮອງປະທານສະພາແຫ່ງຊາດ, ບັນດາທ່ານໃນຄະນະປະຈຳ, ການນຳຂອງ 3 ຫ້ອງວ່າການຂັ້ນສູນກາງ ແລະ ຄະນະຈັດຕັ້ງສູນກາງພັກ.

ໃນຕອນທ້າຍພິທີ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ມີບາງຄຳເຫັນ ໂດຍໄດ້ຊົມເຊີຍຜົນສຳເລັດຂອງທ່ານເລຂາທິການສະພາແຫ່ງຊາດຜູ້ເກົ່າ ແລະ ແນະນຳທ່ານເລຂາທິການສະພາແຫ່ງຊາດຜູ້ໃໝ່ ຮີບຮ້ອນວາງແຜນການເພື່ອສືບຕໍ່ນຳພາ-ຊີ້ນຳການເຄື່ອນໄຫວວຽກງານໃຫ້ດຳເນີນໄປເປັນປົກກະຕິ, ດຳເນີນກອງປະຊຸມພາຍໃນຄະນະເລຂາທິການສະພາແຫ່ງຊາດ, ຮຽກຮ້ອງໃຫ້ບັນດາຄະນະນຳຂອງກົມ ກໍຄືພະນັກງານ-ລັດຖະກອນໃນຄະນະເລຂາທິການສະພາແຫ່ງຊາດ ຈົ່ງໄດ້ເພີ່ມທະວີຄວາມສາມັກຄີເປັນຈິດໜຶ່ງໃຈດຽວພ້ອມກັບເລຂາທິການສະພາແຫ່ງຊາດຜູ້ໃໝ່ ບຸກບືນສູ້ຊົນຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ມີຜົນສຳເລັດອັນໃໝ່, ມີຄຸນນະພາບ ແລະ ວ່ອງໄວທັນເວລາ; ເອົາໃຈໃສ່ເປັນໃຈກາງປະສານສົມທົບ ແລະ ຕິດຕາມຊຸກຍູ້ບັນດາກຳມາທິການ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ກະກຽມດ້ານເນື້ອໃນໃຫ້ແກ່ການດຳເນີນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ; ເອົາໃຈໃສ່ສືບຕໍ່ການບຳລຸງຍົກລະດັບວິຊາການດ້ານຕ່າງໆ ໃຫ້ແກ່ພະນັກງານ-ລັດຖະກອນຂອງຄະນະເລຂາ ທິການສະພາແຫ່ງຊາດ ຢ່າງເປັນປົກກະຕິຕໍ່ເນື່ອງ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ວຽກງານຂອງຄະນະເລຂາທິການສະພາແຫ່ງຊາດ ມີປະສິດທິຜົນ, ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່.

**(ນາງ ອາລີນ ສຸພົມມະປະດິດ)**




# ເຜົາ... ທຳລາຍ ລະບົບນິເວດ

# ດົ້ນກົບເມກ

ເລື່ອງເຜົາຖ່ານໃຊ້ໃນຄົວເຮືອນ ຫຼື ເຜົາຖ່ານຂາຍ ໄດ້ເງິນລ້ຽງຊີບມັນກໍດີຢູ່ດອກ ແຕ່ຜົນເສຍກໍມີຕາມມາບໍ່ໜ້ອຍຄືກັນ: ທຳລາຍລະບົບນິເວດ ທຳລາຍປ່າ-ທຳລາຍທີ່ຢູ່ອາໄສສັດປ່າ-ພາໃຫ້ແຫ້ງແລ້ງ ຜູ້ຂຽນເຫັນດີກັບນະໂຍບາຍ ແຂວງສະຫວັນນະເຂດ ແບບຍໍມືສຸດສອກຜຸ້ນລະ ທີ່ອອກປະກາດແຈ້ງການຊັດເຈນໂລດວ່າ: ຫ້າມບໍ່ໃຫ້ເຜົາຖ່ານສົ່ງຂາຍ ແຈ້ງການເລກທີ 750, 14 ມີນາ 2024 ໃຫ້ຢຸດຕິການຕັດໄມ້ມາເຜົາຖ່ານ ການເກັບຊື້ຖ່ານ, ການເຄື່ອນຍ້າຍຖ່ານດຳໃນຂອບເຂດທົ່ວແຂວງສະຫວັນນະເຂດ.

ເນື້ອໃນໃຈຄວາມຂອງແຈ້ງການ ຂໍ້ 2 ຍິ່ງຄວບຄຸມ ທີ່ຫ້າມບໍ່ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ອອກໃບຢັ້ງຢືນກ່ຽວກັບການຜະລິດຖ່ານດຳ ພ້ອມນີ້, ກໍຫ້າມບໍ່ໃຫ້ພະແນກກະສິກຳແລະປ່າໄມ້ອອກໜັງສືເຄື່ອນຍ້າຍຖ່ານດຳ ທັງພາຍໃນ ແລະ ຕ່າງປະເທດ, ຂໍ້ 1 ໃຫ້ບັນດາບຸກຄົນ, ນິຕິບຸກຄົນ ແລະ ພໍ່ແມ່ປະຊາຊົນຢຸດຕິການຕັດໄມ້ເຜົາຖ່ານ, ເກັບຊື້ຖ່ານ ແລະການເຄື່ອນຍ້າຍຖ່ານດຳ ໃນຂອບເຂດທົ່ວແຂວງສະຫວັນນະເຂດ ຖ້າພົບເຫັນຈະໄດ້ໃຊ້ມາດຕະການຕາມກົດໝາຍ, ຜູ້ຂຽນເຂົ້າໃຈວ່າ: ທົ່ວແຂວງ-ຄະນະນຳແຂວງເພິ່ນຄົງເຫັນຜົນຮ້າຍຫຼາຍກວ່າຜົນດີ ຕັດໄຟແຕ່ຕົ້ນລົມຖືເປັນການດີໃນການແກ້ບັນຫາຈະເກີດໄລຍະຍາວ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ.

ຜູ້ຂຽນຂໍຍົກເອົາຂໍ້ 3 ຂອງແຈ້ງການທີ່ຄວບຄຸມ ຊີ້ນຳໃຫ້ຄະນະສະເພາະກິດຕິດຕາມກວດກາຈັດຕັ້ງປະຕິບັດຢ່າງເຄັ່ງຄັດເຂັ້ມງວດ..., ພວກເຮົາທ່ານຜູ້ອ່ານ ລອງໄລ່ລຽງເບິ່ງຜົນໄດ້-ຜົນເສຍ ທັງໄລຍະສັ້ນ-ຍາວ ທີ່ຈະສົ່ງຜົນກະທົບຕໍ່ລະບົບນິເວດຢ່າງໃຫຍ່ຫຼວງ, ຖ້າວ່າເຜົາຖ່ານໃຊ້ແຕ່ງກິນກໍຍັງດີ ຫຼື ປະຊາຊົນລາວ ເວລາແຕ່ງກິນຫຸງຕົ້ມກໍມັກເອົາຟືນມາດັງ ໃຊ້ໄມ້ຕາຍແລ້ວບໍ່ທຳລາຍທຳມະຊາດ ແຕ່ຖ້າຫຼາຍແຂວງທີ່ປະຊາຊົນຟ້າວຕັດໄມ້ນ້ອຍເຜົາຂາຍສົ່ງຕ່າງປະເທດເຮົາຈະແຫ້ງແລ້ງຍາວນານ ເພາະຂະໜາດວ່າສວນມັນຕົ້ນກໍຍັງໄດ້ຖາງປ່າຫຼາຍແລ້ວ!






# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

ຖ້າຫາກບໍ່ແທດເຖິງກັບຄວາມຈິງນັ້ນ ຈະອົບຮົມເທົ່າໃດປີກໍປ່ອຍປະໂຫຍດລ້າໆ. ເປັນໜ້າເສຍດາຍທີ່ສຸດ ທີ່ພະນັກງານເຮົາບາງຄົນຍັງບໍ່ທັນເຂົ້າໃຈເຫດຜົນອັນງ່າຍໆດັ່ງກ່າວນັ້ນ. ດ້ວຍເຫດນັ້ນ ຈຶ່ງມີພະນັກງານບາງຄົນເອົາບົດຮຽນກ່ຽວກັບເສດຖະສາດສອນໃຫ້ອ້າຍເອື້ອຍນ້ອງຊາວບ້ານນອກທີ່ຢູ່ຕາມພູດອຍ. ໄປລວມຄວາມແລ້ວ ພວກເຮົາເວົ້າໄດ້ວ່າວິທີເຮັດວຽກ, ວິທີຈັດຕັ້ງ, ວິທີເວົ້າລົມໂຄສະນາ ວິທີວາງຄຳຂວັນ, ວິທີຂຽນໜັງສືພິມແລະອື່ນໆຂອງພວກເຮົາທັງໝົດຕ້ອງເຮັດຖືກຕາມຂອບເຂດຂອງຄວາມທີ່ວ່າ:“ໃຫ້ອອກມາຈາກໝູ່ປະຊາຊົນແລະກັບຄືນໄປເຊື່ອມຊຶມເລິກເຂົ້າໃນໝູ່ປະຊາຊົນ.

ບໍ່ວ່າວຽກໃຫຍ່ ວຽກນ້ອຍ ພວກເຮົາກໍຕ້ອງກວດເບິ່ງໃຫ້ຄັກ ແລະ ເຮັດໃຫ້ເໝາະສົມກັບລະດັບວັດທະນະທຳ, ເໝາະກັບບົດຮຽນໃນການຕໍ່ສູ້, ເໝາະກັບຄວາມມັກຄວາມປະສົງ ແລະ ສະພາບການຕົວຈິງຂອງປະຊາຊົນ, ໃຫ້ອາໄສສິ່ງທີ່ວ່າມານັ້ນ ເພື່ອວາງວິທີເຮັດວຽກ ແລະ ວິທີຈັດຕັ້ງ. ເຮັດແນວນັ້ນຈຶ່ງຈະແກ່ດຶງເອົາປະຊາຊົນມາຮ່ວມມືນຳພວກເຮົາໄດ້.

ອ່ານຕໍ່ສະບັບໜ້າ...




# ເສີຍເມີຍ – ເມີນເສີຍ

ເສີຍເມີຍ ແລະ ເມີນເສີຍ ເປັນສອງຄຳທີ່ມີຄວາມໝາຍໃກ້ຄຽງ ເຊິ່ງມີຄວາມຄືແລະ ຕ່າງກັນດັ່ງນີ້:

‘ເສີຍເມີຍ’ ເປັນຄຳຊ້ອນເພື່ອສຽງ ທີ່ເກີດຈາກການນຳເອົາຄຳທີ່ມີພະຍັນຊະນະແກນຕ່າງກັນ ‘ສ’ ແລະ ‘ມ’ ແຕ່ສຽງສະຫຼະແລະຕົວສະກົດຄືກັນ ‘ເXີຍ’ ມາຊ້ອນໃສ່ກັນເພື່ອໃຫ້ອອກສຽງງ່າຍແລະເກີດສຽງສຳຜັດກັນ. ‘ເສີຍເມີຍ’ ເປັນປະເພດຄຳກິລິຍາ ໝາຍເຖິງ “ບໍ່ເອົາໃຈໃສ່, ລະເລີຍ, ບໍ່ຫ່ວງໄຍ, ບໍ່ສົນບໍ່ກ່ຽວນຳ” ເຊັ່ນ

- ຜູ້ໃດຫາກເສີຍເມີຍຕໍ່ການຮ່ຳຮຽນ ກໍຈະເຮັດໃຫ້ຊີວິດບໍ່ມີຄວາມກ້າວໜ້າ.
- ຍ້ອນມີຄົນຮັກໃໝ່ ນາງຈຶ່ງເສີຍເມີຍຕໍ່ເຂົາ.
- ພາຍຫຼັງລາວຖືກຕຳໜິຢ່າງແຮງ ລາວກໍມີທ່າທີເສີຍເມີຍຕໍ່ໝູ່ຄູ່.

‘ເມີນເສີຍ’ ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ ‘ເມີນ’ ທີ່ໝາຍເຖິງ “ເບືອນໜ້າໜີ, ບໍ່ຫຼຽວ, ບໍ່ແລ” ແລະ ‘ເສີຍ’ ໝາຍເຖິງ “ບໍ່ເອົາຫົວຊາ, ບໍ່ເອົາໃຈໃສ່, ບໍ່ສະແດງຄວາມຮູ້ສຶກ”. ເມື່ອສອງ ຄຳນີ້ປະສົມເຂົ້າກັນເປັນ ‘ເມີນເສີຍ’ ກໍໝາຍເຖິງ “ບໍ່ສົນໃຈໄຍດີ, ສະແດງອາການບໍ່ໃສ່ໃຈຕໍ່ສິ່ງ ຫຼືເຫດການທີ່ ປະສົບພົບພໍ້” ເຊັ່ນ

- ບໍ່ຄວນເມີນເສີຍຕໍ່ປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມຊຸ່ມື້ນີ້.
- ຄັນຫົວໜ້າຍັງເມີນເສີຍຢູ່ ບັນຫານີ້ກໍຄົງຈະເພີ່ມຄວາມສະຫຼັບຊັບຊ້ອນຫຼາຍຂຶ້ນ.
- ພວກເຮົາບໍ່ຄວນເມີນເສີຍຕໍ່ສະພາບການທີ່ເກີດຂຶ້ນໃນຄັ້ງນີ້ ຕ້ອງເອົາໃຈໃສ່ແກ້ໄຂບັນຫາໃຫ້ໄດ້.

**# ຂໍ້ສັງເກດ:** ສອງຄຳນີ້ມີຄວາມໝາຍຄ້າຍຄືກັນ ແຕ່ເວລາໃຊ້ ‘ເມີນເສີຍ’ ຈະມີຄວາມໝາຍໜັກກວ່າ ‘ເສີຍເມີຍ’.

# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ພັກພາອາໄສ | ~~ພັກພາອາໃສ~~ |
| ນ້ຳໃສໃຈຈິງ | ~~ນ້ຳໄສໃຈຈິງ~~ |
| ພໍ່ແມ່ຫ່ວງໄຍ | ~~ພໍ່ແມ່ຫ່ວງໃຍ~~ |
| ລາວມັກຢອກໄຍ | ~~ລາວມັກຢອກໃຍ~~ |
| ນາງໃສ່ສິ້ນໄໝ | ~~ນາງໄສ່ສິ້ນໃໝ~~ |
| ປັບໄໝໃສ່ໂທດ | ~~ປັບໃໝໄສ່ໂທດ~~ |
| ຝັງຈິດຝັງໃຈ | ~~ຝັງຈິດຝັງໄຈ~~ |
| ວິໄຈວິຈານ | ~~ວິໃຈວິຈານ~~ |
| ງານແຫ້ໆໄດ໋ | ~~ງານແຫ້ໆໃດ~~ |



## ສຸກສະບາຍທາຍໂລດາ

# 5 ສະໝຸນໄພຊ່ວຍຍ່ອຍອາຫານ

ໂດຍ: ທິວາກະທິ



ຫຼາຍໆຄົນຄົງພົບພໍ້ກັບບັນຫາອາການແໜ້ນທ້ອງ, ທ້ອງອືດ ເຊິ່ງເກີດຂຶ້ນໄດ້ເກືອບທຸກໄວ ໂດຍສະເພາະກັບຜູ້ໃຫຍ່ຈະພົບບັນຫານີ້ຫຼາຍກ່ວາເດັກນ້ອຍເນື່ອງມາຈາກລະບົບຍ່ອຍອາຫານຂອງເດັກນ້ອຍຈະເຮັດໜ້າທີ່ໄດ້ດີກວ່າ ໂດຍອາການເຫຼົ່ານີ້ຈະເປັນໃນໄລຍະເວລາສັ້ນໆແລ້ວກໍຈະຫາຍດີເປັນປົກກະຕິ ແຕ່ມັນຈະສົ່ງຜົນກະທົບຕໍ່ລະບົບທາງເດີນອາຫານໃນໄລຍະຍາວຖ້າຫາກບໍ່ຮີບຮັກສາໃນຕໍ່ໜ້າອາດຈະເກີດໂຣກພະຍາດຕ່າງໆເຖິງຂັ້ນທີ່ຮຸນແຮງໄດ້; ດັ່ງນັ້ນ, ຜູ້ຂຽນຈຶ່ງໄດ້ມີ 5 ສະໝຸນໄພທີ່ຫາໄດ້ງ່າຍໆໃນເຮືອນຄົວ ດັ່ງນັ້ນ:

**1. ຂີ້ໝິ້ນ:** ຂີ້ໝິ້ນຊ່ວຍບຳລຸງລະບົບການຍ່ອຍອາຫານ, ຫຼຸດອາການເຈັບທ້ອງ, ແໜ້ນທ້ອງ, ຊ່ວຍຍ່ອຍອາຫານ, ຊ່ວຍຂັບລົມ ແລະ ຮັກສາໂຣກລຳໄສ້ອັກເສບ.

**2. ຂີງ:** ຊ່ວຍແກ້ທ້ອງອືດ, ເຈັບສຽບທ້ອງ, ຊ່ວຍຂັບລົມໃນກະເພາະ ແລະ ລຳໄສ້ ນອກນີ້, ຍັງສາມາດຊ່ວຍປ້ອງກັນການເກີດແຜໃນກະເພາະອາຫານທັງຊ່ວຍລະບົບຍ່ອຍອາຫານໄດ້ດີ.

**3. ກະທຽມ:** ນອກຈາກຊ່ວຍເພີ່ມກິ່ນອາຫານໃຫ້ໜ້າຮັບປະທານແລ້ວ ກະທຽມຍັງຊ່ວຍເພີ່ມປະລິມານນ້ຳຍ່ອຍອາຫານຊ່ວຍໃຫ້ຍ່ອຍອາຫານໄດ້ດີ.

**4. ຫອມບົ່ວແດງ:** ຫອມບົ່ວແດງນອກຈາກຊ່ວຍດີຫວັດແລ້ວ ຍັງມີສັບພະຄຸນໃນເລື່ອງການຂັບລົມ, ຊ່ວຍໃຫ້ຈະເລີນອາຫານ ແລະ ການຍ່ອຍອາຫານໄດ້ດີຂຶ້ນ.

**5. ພິກໄທ:** ຖືວ່າເປັນອີກໜຶ່ງສະໝຸນໄພທີ່ມີລົດຊາດເຜັດຮ້ອນທີ່ເຕັມໄປດ້ວຍສັບພະຄຸນ ເຊິ່ງພິກໄທສາມາດຊ່ວຍກະຕຸ້ນໃຫ້ກະເພາະອາຫານຂັບລົມອອກໄດ້ດີ ທັງນັ້ນຍັງຊ່ວຍເພີ່ມການເຜົາຜານໃນຮ່າງກາຍ, ຊ່ວຍຍ່ອຍອາຫານ, ຊ່ວຍຫຼຸດອາການແໜ້ນທ້ອງ, ອືດທ້ອງ.

**ແຫຼ່ງຂໍ້ມູນ: ພາເຂົ້າລາວ**




## ອາດ ກະວີລາວ

# ສຽງຮ້ອງຈາກປ່າ

# ສາວຄູ ວັງຄຳກລິ່ນ

❊ ບັນຈົງຂຽນຂີດແຕ້ມ
ເປັນຄຳກອນຈາກໃຈ
ບ່ອນເຮົາຢູ່ອາໄສນັ້ນ
ຈົນບໍ່ອາດທົນຢູ່ໄດ້
ແຊມຊໍ່ຕົວອັກສອນ
ເພື່ອຊູ່ຄົນເຫັນຮູ້
ນັບວັນຍິ່ງເຂີນຂາດ
ຮີບໄຫ້ທຸກຄືນ ພີ່ນ້ອງເອີຍ

❊ ຄາວກ່ອນ ຂົງເຂດນີ້
ສາຍທາລາລົນໄຫຼ
ມັດສາລອຍຊິມຫຼິ້ນ
ພຶກສາຊາດຊື່ນຊ້ອຍ
ມີຫຼາຍສິ່ງຕະການຕາ
ລ່ອງລົງເລີງເລື້ອຍ
ຍາມຝົນຕົກໜ່ຳ
ໄກວກ້ຽວກອດກັນ

❊ ສັດສາທັງໃຫຍ່ນ້ອຍ
ສາລິກາໂບຍບິນ
ກວາງຟານນ້ອຍ
ໄກ່ປ່າຈຳແຈຂັນສົ່ງເອີ້ນ
ເລາະແລ່ນໄປມາ
ໝູ່ເຫງັນໄຕ່ຕາມລຳໄມ້
ນຳຫຼັງຂອງແມ່
ຫາຄູ່ຂຶ້ນສູ່ຄອນ ສະອອນເດ!

❊ ດອກເຜົາ ຫອມເກືອກກົ້ວ
ໄມ້ດູ່ແດງຍັງຄົງເຫັນ
ຕົ້ນໄມ້ ຫຼາຍຊະນິດນັ້ນ
ພືໃບເປັນຮົ່ມກວ້າງ
ໄປທົ່ວດອນດິນ
ຢັ່ງຢາຍໃນດົງກວ້າງ
ຂຽວກະຈີຊວນເບິ່ງ
ສັດສາໄດ້ເພິ່ງພິງ ແທ້ນາ!

❊ ບັດນີ້ ຄືປ່ຽນປີ້ນ
ສາຍອາໂປເຫືອດຫາຍ
ສັດສິ່ງ ນາງນັ້ນ
ບາງພ່ອງ ພວມແດ່ວດິ້ນ
ທຳມະຊາດເຄີຍມີມາ ເດນໍ!
ບໍ່ເຫຼືອພໍນ້ອຍ
ໜີໄປໄກຖິ່ນ
ຊີສູນສິ້ນຊີບວາຍ ແລ້ວເດ

❊ ເພິ່ນວ່າ ເປັນເຫດນີ້
ແລ້ວໃຜ ເປັນໂຕການ
ບາງເຂດ ສະຫງວນໄວ້
ຍັງຈອງຫອງ ໄປຕັດປ້ຳ
ເພາະປ່າຖືກທຳລາຍ
ຕັດຕອນລຳໄມ້
ເປັນສະຖານທຽວທ່ອງ
ບໍ່ສົນຊ້ຳ ຄຳນັ້ນວ່າ «ສະຫງວນ»

❊ ຂໍໃຫ້ ພິຈາລະນາຄິດຄົ້ນ
ກ່ອນຂ້ອຍຊິຂາດໃຈ
ຂໍໃຫ້ ເອົາໃຈຕັ້ງ
ຂໍຈິ່ງ ປົກປ້ອງ-ຄຸ້ມຄອງຊຸມຂ້ອຍ
ດົງ» ຄຳຂຽວ « ແຫ່ງນີ້
ຊູຊ່ວຍຮັກສາ ແດ່ນາ
ດັ້ບສູນເສຍສ້ຽງ
ປູກທົດແທນໂດຍດ່ວນ
ດຽວດ້ານດັ່ງຊີວາ ນັ້ນເນີ!



## ຫົກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

# ສາວຈົ້ມ

❊ **ແຫຼ່ງ**ຂໍ້ມູນໃຫ້ຮູ້ວ່າ **ສະເພາະເດືອນເມສາ** 2024 **ມີອຸບັດເຫດ**ເກີດຂຶ້ນ**ທີ່ວນະຄອນຫຼວງ 97 ຄັ້ງ** ບາດເຈັບ 118 ແລະ **ເສຍຊີວິດ 12 ຄົນ** ທຽບໃສ່ເດືອນກ່ອນໜ້າ ເຫັນວ່າ**ເພີ່ມຂຶ້ນ 10 ຄັ້ງ** ເພິ່ນຍັງແຈ້ງໃຫ້ຮູ້ຕື່ມອີກວ່າ **ສາເຫດ**ສ່ວນຫຼາຍ ເປັນຍ້ອນ**ຄະໜົນເປ່ເພ, ຂັບລົດໄວ, ບໍ່ມີໄຟເຍືອງທາງ, ເມົາແລ້ວ**ຂັບ, **ປະໝາດຂາດສະຕິ ບໍ່ປະຕິບັດຕາມກົດຈະລາຈອນ** ຈຶ່ງເຮັດໃຫ້ເກີດອຸບັດເຫດໄດ້ງ່າຍ ສຸດທ້າຍ**ເສຍຊັບ**ພ້ອມທັງ**ຊີວິດ**ອີບຊີ **ຫາກບໍ່ປະຕິບັດ** ຕໍ່ກົດຈະລາຈອນເອົ້າ ຂໍໃຫ້ເອົາໃຈຕັ້ງ ປະຕິບັດກົດລະບຽບ ພີ່ນ້ອງເອີຍ! ຈັ່ງບໍ່ເກີດເຫດຮ້າຍ ໂດຍດ້ານຂ່າວໄຂ **ນັ້ນແລ້ວ!**

❊ **ໄລ**ຍະນີ້ ພອນກະກຽມ**ເຂົ້າສູ່ລະດູຝົນ** ຂໍໃຫ້ທຸກຄົນເປັນເຈົ້າການ**ປ້ອງກັນຕົນເອງ** ຈາກພະຍາດໄຂ້ຍຸງລາຍ ເພາະໃນທ້າຍອາທິດຜ່ານມາ ມີຂ່າວລາຍງານໃຫ້ຮູ້ວ່າ ນັບແຕ່**ເດືອນມັງກອນຮອດເດືອນພຶດສະພາ** ປະເທດລາວມີໂຕເລກ**ໄຂ້ຍຸງລາຍ 2.770 ຄົນ** ເຊິ່ງແຂວງທີ່ຕິດອັນດັບຕົ້ນໆແມ່ນ**ເຊກອງ 881 ຄົນ** ໃນນັ້ນເສຍຊີວິດ **1 ຄົນ, ຮອງລົງມາແມ່ນນະຄອນຫຼວງ 556** ເສຍຊີວິດ 2 ຄົນ ສ່ວນແຂວງຫຼວງນ້ຳທາ **229 ຄົນ**, ສະຫວັນນະເຂດ **158 ຄົນ** ແລະ ແຂວງອື່ນໆ ແມ່ນບໍ່ມີຜູ້ເສຍຊີວິດ ແນວໃດກໍດີ ເພາະຍັງມີປະໂຫຍກກ່າວເຕືອນໄວ້ວ່າ **"ຍຸງລາຍກໍຮ້າຍກວ່າເສືອ"** ເພາະສະນັ້ນ ພີ່ນ້ອງຕ້ອງເອົາເອົາໃຈໃສ່ປະຕິບັດຕາມຫຼັກການ 5 ປ ທີ່ເພິ່ນວາງລົງໄວ້ ຂໍໃຫ້ທຳລາຍມ້າງ ກະໂປະກະປ໋ອງ ພາຊະນະ ບໍ່ໃຫ້ນ້ຳຂັງທົ້ງ ໜອນນ້ຳບໍ່ແຜ່ພັນ **ພີ່ນ້ອງເອີຍ!**

## ຊອບຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ມົດງ່າມວິເສດ

ເຫດເກີດທີ່ສວນສັດແຫ່ງໜຶ່ງ : ເມື່ອມົດບໍ່ພໍໃຈ ທີ່ຊ້າງທຽວມາຢຽບຮັງຂອງພວກຕົນ ຈຶ່ງພ້ອມກັບທຸ້ມກັດໂຕຊ້າງ, ຊ້າງກະດຽມຄີງ ເລີຍສັ່ນຂົບພິບໆ ມົດພາກັນຕົກລະ, ຍັງເຫຼືອແຕ່ມົດພຽງໂຕດຽວຈັບຢູ່ຄໍຊ້າງ ພວກເພື່ອນໆຂອງມົດທີ່ຫຼຽວເຫັນໝູ່ໂຕໜຶ່ງຈັບຢູ່ເທິງຄໍຊ້າງ ເລີຍພາກັນຮ້ອງໃສ່ວ່າ: ເອົາເລີຍ! ເອົາເລີຍ! ບີບຄໍມັນຕາຍໂລດ!!!



## ຄະຕິເຕືອນໃຈ

# ດອກຫຍ້າ

ມັກຢາມສະຫາຍເສຍຂອງຝາກ
ມັກປາກຫຼົງຄວາມຜິດ

ລັດຖະສະພາຕ່າງປະເທດ

# ມາເນເລ ໄດ້ຮັບເລືອກເປັນ ນາຍົກລັດຖະມົນຕີຜູ້ໃໝ່ ຂອງໝູ່ເກາະຊາໂລມົງ



ເມື່ອວັນພະຫັດທີ 02 ພຶດສະພາຜ່ານມາ, ທ່ານ ດາວິດ ວູນາກີ (David Vunagi) ຜູ້ປົກຄອງ (Governor General) ຂອງໝູ່ເກາະຊາໂລມົງ ໄດ້ປະກາດວ່າ: ລັດຖະມົນຕີກະຊວງການຕ່າງປະເທດ ທ່ານ ເຢເຣມີຍ໌ ມາເນເລ (Jeremiah Manele) ໄດ້ຮັບການເລືອກຕັ້ງໂດຍສະພາແຫ່ງຊາດ ໃຫ້ເປັນນາຍົກລັດຖະມົນຕີຜູ້ໃໝ່ຂອງໝູ່ເກາະຊາໂລມົງ; ທ່ານ ວູນາກີ ກ່າວຕໍ່ໄປວ່າ ການລົງຄະແນນສຽງປິດລັບໃນຕອນເຊົ້າວັນພະຫັດ, ທ່ານ ມາເນເລ ເອົາຊະນະຜູ້ນຳຝ່າຍຄ້ານ ທ່ານແມດທິວ ວາເລ (Matthew Wale) ດ້ວຍຄະແນນສຽງ 31 ຕໍ່ 18 ໃນສະພາແຫ່ງຊາດທີ່ຫາກໍໄດ້ຮັບການເລືອກຕັ້ງໃໝ່ທັງໝົດ 50 ທີ່ນັ່ງ.

ສະມາຊິກສະພາແຫ່ງຊາດທ່ານໜຶ່ງ ບໍ່ໄດ້ເຂົ້າຮ່ວມໃນການລົງຄະແນນສຽງ ເພາະວ່ານາງບໍ່ສາມາດມາຮອດນະຄອນຫຼວງໂຮເນຍຣາ (Honiara) ໄດ້ທັນຕາມກຳນົດເວລາ, ອັນເນື່ອງມາຈາກໄລຍະທາງຢູ່ໄກຈາກນະຄອນຫຼວງ. ແຫຼ່ງຂ່າວຈາກພັກຄວາມເປັນເຈົ້າຂອງ, ຄວາມສາມັກຄີແລະຄວາມຮັບຜິດຊອບ (ຫຼືພັກຂອງພວກເຮົາ) [Ownership, Unity and Responsibility Party (or Our Party)], ພັກກຳອຳນາດປັດຈຸບັນ ກ່າວກັບຊິນຮວາ.

ທ່ານ ມາເນເລ ຈະເຂົ້າຮັບຕຳແໜ່ງຕໍ່ຈາກທ່ານ ມານາສເຊ ໂຊກາວາເຣ (Manasseh Sogavare) ທີ່ປະກາດຖອນຕົວອອກຈາກການລົງສະໝັກຮັບຕຳແໜ່ງນາຍົກລັດຖະມົນຕີສຳລັບວາລະໃໝ່ ເມື່ອວັນຈັນທີ 29 ເມສາຜ່ານມາ.

ທ່ານ ມາເນເລ ກ່າວຕໍ່ບັນດານັກຂ່າວຢູ່ນອກອາຄານສະພາແຫ່ງຊາດ ວ່າ: ຂ້າພະເຈົ້າຈະປະຕິບັດໜ້າທີ່ຂອງຕົນຢ່າງພາກພູມ ແລະ ດ້ວຍຄວາມຊື່ສັດ, ຂ້າພະເຈົ້າຈະໃຫ້ຄວາມສຳຄັນກັບຜົນປະໂຫຍດຂອງປະຊາຊົນແລະປະເທດຂອງພວກເຮົາ ຢູ່ເໜືອຜົນປະໂຫຍດອື່ນໆຕະຫຼອດເວລາ. ທ່ານກ່າວອີກວ່າ ລັດຖະບານເພື່ອຄວາມເປັນເອກະພາບແຫ່ງຊາດ ແລະ ການປ່ຽນແປງ ພວມດຳເນີນນະໂຍບາຍຂອງຕົນ ແລະ ໂຄງການ 100 ວັນ ທີ່ຈະປະກາດໃນໄວໆນີ້.

# ພັກ VMRO-DPMNE ຊະນະການເລືອກຕັ້ງ



ທ່ານ ນາງ ກໍດານາ ຊິນຢານອບກະຊາ ດາບໂກວາ

ສາທາລະນະລັດມາເຊໂດນີເໜືອ ໄດ້ຈັດການເລືອກຕັ້ງສະພາແຫ່ງຊາດ ແລະ ປະທານາທິບໍດີຮອບທີ 2 ເມື່ອວັນພຸດທີ 08 ພຶດສະພາຜ່ານມາ; ມີຜູ້ສະໝັກຮັບເລືອກຕັ້ງຫຼາຍກວ່າ 1.700 ຄົນ ຈາກ 6 ກຸ່ມ ກຳລັງຍາດຊີງ 120 ທີ່ນັ່ງໃນສະພາແຫ່ງຊາດ ທີ່ມີອາຍຸການ 4 ປີ, ຄູ່ແຂ່ງຂັນຕົ້ນຕໍໄດ້ແກ່ແນວຮ່ວມ "ເພື່ອອະນາຄົດຂອງເອີຣົບ" (For a European Future) ທີ່ນຳໂດຍສະຫະພັນສັງຄົມປະຊາທິປະໄຕແຫ່ງມາເຊໂດນີ (Social Democratic Union of Macedonia-SDSM) ພັກກຳອຳນາດປັດຈຸບັນ ແລະ ແນວຮ່ວມ "ມາເຊໂດນີຂອງພວກທ່ານ" (Your Macedonia) ນຳໂດຍພັກຝ່າຍຄ້ານຕົ້ນຕໍ VMRO-DPMNE.

ປະເດັນສຳຄັນຂອງການເລືອກຕັ້ງຄັ້ງນີ້ ແມ່ນການເຂົ້າເປັນສະມາຊິກສະຫະພາບເອີຣົບ, ການຕໍ່ສູ້ກັບການສໍ້ລາດບັງຫຼວງ ແລະ ຄວາມທຸກຍາກ, ແລະ ຊຸກຍູ້ການເຕີບໂຕທາງເສດຖະກິດ.

ສຳລັບການເລືອກຕັ້ງປະທານາທິບໍດີ, ທ່ານ ນາງ ກໍດານາ ຊິນຢານອບກະຊາ ດາບໂກວາ (Gordana Siljanovksa Davkova) ສາສະດາຈານດ້ານກົດໝາຍທີ່ບຳນານແລ້ວ ແລະ ອະດີດສະມາຊິກແຫ່ງຊາດ, ຜູ້ສະໝັກຈາກພັກ VMRO-DPMNE ໄດ້ຮັບ 41,2 ເປີເຊັນຂອງຄະແນນສຽງໃນຮອບທຳອິດ; ໃນຂະນະທີ່ປະທານາທິບໍດີຄົນປັດຈຸບັນ ແລະ ຜູ້ສະໝັກຈາກພັກ SDSM ທ່ານ ສະຕີໂວ ເພນດາຣອບສະກີ (Stevo Pendarovski) ໄດ້ຮັບ 20,5 ເປີເຊັນ.

ອີງຕາມຜົນການເລືອກຕັ້ງຢ່າງເປັນທາງການທີ່ເປີດເຜີຍໃນວັນທີ 9 ພຶດສະພາ, ແນວຮ່ວມ "ມາເຊໂດນີຂອງພວກທ່ານ" ຊະນະທັງການເລືອກຕັ້ງສະພາແຫ່ງຊາດ ທີ່ໄດ້ 58 ທີ່ນັ່ງ ແລະ ປະທານາທິບໍດີ.

ທ່ານ ດິມິທາຣ໌ ໂຄວາເຊບສະກີ (Dimitar Kovacevski) ຫົວໜ້າພັກສະຫະພັນສັງຄົມປະຊາທິປະໄຕແຫ່ງມາເຊໂດນີ ຍອມຮັບຄວາມພ່າຍແພ້ທັງສອງການເລືອກຕັ້ງ ໂດຍແນວຮ່ວມ "ເພື່ອອະນາຄົດຂອງເອີຣົບ" ໄດ້ພຽງ 18 ທີ່ນັ່ງ.

**ແຫຼ່ງຂ່າວ: ຊິນຮວາ**

# ລັດຖະບານແຊັກບີຊຸດໃໝ່ຈັດຕັ້ງຂຶ້ນ ນຳໂດຍນາຍົກລັດຖະມົນຕີ ວູເຊວິດ



ໃນວັນພະຫັດທີ 02 ພຶດສະພາຜ່ານມາ, ສະພາແຫ່ງຊາດແຊັກບີ ໄດ້ເລືອກຕັ້ງລັດຖະບານຊຸດໃໝ່ຂອງປະເທດ ເຊິ່ງນຳໂດຍນາຍົກລັດຖະມົນຕີ ມີລອສ ວູເຊວິດ (Milos Vucevic); ລັດຖະບານຂອງທ່ານ ວູເຊວິດ, ທີ່ມີລັດຖະມົນຕີກະຊວງການເງິນ ຊີນີຊາ ມາລີ (Sinisa Mali) ເປັນຮອງນາຍົກລັດຖະມົນຕີຜູ້ທຳອິດ, ໄດ້ສາບານຕົວເຂົ້າຮັບໜ້າທີ່ ຫຼັງຈາກໄດ້ຮັບຄະແນນສຽງ 152 ສຽງ ໃນສະພາແຫ່ງຊາດທີ່ມີສະມາຊິກທັງໝົດ 250 ທ່ານ.

ນອກຈາກທ່ານ ມາລີ ແລ້ວ, ຕຳແໜ່ງຮອງນາຍົກລັດຖະມົນຕີ ໄດ້ຖືກຈັດສັນໃຫ້ທ່ານ ອີວີກາ ດາຊິດ (Ivica Dacic) ລັດຖະມົນຕີກະຊວງກິດຈະການພາຍໃນ, ທ່ານ ນາງ ອີເຣນາ ວູໂຈວິດ (Irena Vujovic) ລັດຖະມົນຕີກະຊວງປົກປັກຮັກສາສິ່ງແວດລ້ອມ, ແລະ ທ່ານ ອາເລັກຊານດາຣ໌ວູລິນ (Aleksandar Vulin) ອະດີດລັດຖະມົນຕີກະຊວງກິດຈະການພາຍໃນ ແລະ ກະຊວງປ້ອງກັນປະເທດ.

ໃນການຖະແຫຼງນະໂຍບາຍໂດຍຫຍໍ້ໃນອະນາຄົດຂອງລັດຖະບານຕໍ່ສະພາແຫ່ງຊາດ ເມື່ອວັນພຸດທີ 01 ພຶດສະພາ, ທ່ານ ວູເຊວິດ ກ່າວວ່າ ຈະສືບຕໍ່ຮັກສານະໂຍບາຍຂອງທ່ານ ນາງ ອານາ ບຣະນາບິດ (Ana Brnabic) ນາຍົກລັດຖະມົນຕີຄົນກ່ອນ; ນາຍົກລັດຖະມົນຕີຜູ້ໃໝ່ຍັງໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງການພົວພັນຄູ່ຮ່ວມມືຍຸດທະສາດຂອງສາທາລະນະລັດແຊັກບີ ກັບ ສປຈີນ.

ລັດຖະບານແຊັກບີຊຸດໃໝ່ ມີສະມາຊິກ 32 ທ່ານ, ປະກອບດ້ວຍ 25 ກະຊວງ ແລະ 5 ລັດຖະມົນຕີ (minister without portfolio).

**ແຫຼ່ງຂ່າວ: ຊິນຮວາ**

# ລິບັງ ເລື່ອນການເລືອກຕັ້ງເທດສະບານ ຍ້ອນຂາດສະຖຽນລະພາບດ້ານຄວາມປອດໄພ

ລັດຖະສະພາລີບັງ ຫຼື ເລບານອນ ໄດ້ຮັບຮອງເອົາການເລື່ອນເວລາການເລືອກຕັ້ງລະດັບເທດສະບານ ທີ່ກຳນົດຈະຈັດຂຶ້ນໃນວັນອາທິດທີ 12 ພຶດສະພາຜ່ານມາ ແລະ ຕໍ່ອາຍຸການຂອງສະພາເທດສະບານ (municipal council) ທີ່ມີຢູ່ອອກໄປອີກ 1 ປີ ຈົນເຖິງວັນທີ 31 ພຶດສະພາ 2025, ຕາມສຳນັກຂ່າວແຫ່ງຊາດ (NNA) ລາຍງານ.

ເຖິງວ່າຈະມີການແບ່ງແຍກລະຫວ່າງພັກການເມືອງຕ່າງໆ, ການຕັດສິນໃຈດັ່ງກ່າວໄດ້ຮັບການອະນຸມັດເພື່ອຕອບສະໜອງຕໍ່ສະຖານະການດ້ານຄວາມປອດໄພ, ໂດຍສະເພາະແມ່ນການປະທະກັນທາງທະຫານທີ່ກຳລັງດຳເນີນຢູ່ ລະຫວ່າງຮິດບອນເລາະ (Hezbollah) ກັບກອງທັບອິດສະຣາແອນ.

ການເລືອກຕັ້ງລະດັບເທດສະບານຄັ້ງຫຼ້າສຸດໃນລີບັງ ໄດ້ຈັດຂຶ້ນເມື່ອເດືອນພຶດສະພາ 2016 ໂດຍມີການເລືອກຕັ້ງສະພາເທດສະບານ ແລະ ເຈົ້າໜ້າທີ່ທ້ອງຖິ່ນ, ມີວາລະການດຳລົງຕຳແໜ່ງ 6 ປີ; ກ່ອນໜ້ານີ້ ໄດ້ຕໍ່ອາຍຸການ 2 ຄັ້ງຕິດຕໍ່ກັນ ຄື: ຄັ້ງທຳອິດໃນເດືອນມີນາ 2022 ເປັນເວລາ 1 ປີ ຍ້ອນການທັບຊ້ອນກັບການເລືອກຕັ້ງລັດຖະສະພາ ແລະ ຕໍ່ມາໃນປີ 2023 ອີກປີໜຶ່ງ ເນື່ອງຈາກຂໍ້ຫຍຸ້ງຍາກທາງດ້ານການເງິນບໍ່ພຽງພໍ.

**ແຫຼ່ງຂ່າວ: ຊິນຮວາ**

ເຫັນໄວ້ ໄດ້ຂຶດຮຽນ

# ຍາມກິນເຂົ້າຂໍໃຫ້ເຊົາໂທ

❖ ວິເສດ ສະແຫວງສຶກສາ

ມີເລື່ອງຕະຫຼົກ ແລະ ຄລິບ (Clip) ວິດີໂອມ່ວນໆຊວນຫົວຫຼາຍເລື່ອງກ່ຽວກັບພະຍາດຕິດໂທລະສັບມືຖືອະເນກປະສົງ(ສະມາດໂຟນ) ຫຼືທີ່ຄົນເອີ້ນວ່າສັງຄົມກົ້ມໜ້າ. ເລື່ອງ ແລະ ວິດີໂອທີ່ເວົ້າມານັ້ນ ມີຈຸດປະສົງເພື່ອໃຫ້ສ້າງບັນຍາກາດ, ມີອາລົມເບີກບານມ່ວນຊື່ນ ແຕ່ຂາດເປົ້າໝາຍທີ່ໜັກແໜ້ນເພື່ອແກ້ໄຂສັງຄົມກົ້ມໜ້າ. ສ່ວນຢູ່ປະເທດສິງກະໂປນັ້ນ ເຂົາເອົາຈິງເອົາຈັງກ່ຽວກັບບັນຫານີ້ ແຕ່ກໍບໍ່ມີກົດໝາຍ ຫຼື ມາດຕະການທາງບໍລິຫານເພື່ອຫ້າມຄົນກົ້ມໜ້າໃສ່ໜ້າຈໍໂທລະສັບແບບເດັດຂາດ. ແຕ່ຖ້າເຫຼືອດຕາໃສ່ໜ້າຈໍໂທລະສັບມືຖືເວລາຂັບລົດແລ້ວ ກໍຈະກາຍເປັນເລື່ອງຄໍຂາດບາດຕາຍແທ້ໆ. ແນວໃດກໍດີ ທາງການຂອງສິງກະໂປ ເຫັນວ່າການໃຊ້ໂທລະສັບມືຖືຈົນຕິດເປັນນິດໄສເກີນໄປນັ້ນ ສິ່ງຜົນກະທົບຕໍ່ການພົວພັນລະຫວ່າງຄົນກັບຄົນ ໂດຍສະເພາະແມ່ນໃນລະຫວ່າງສະມາຊິກຄອບຄົວ, ລະຫວ່າງໝູ່ເພື່ອນທີ່ຄວນມີການພົວພັນແບບກັນເອງຢ່າງໃກ້ຊິດ. ຕໍ່ມາກໍມີກຸ່ມຄົນໃນສັງຄົມຂອງປະເທດນີ້ ທີ່ເຫັນວ່າການແກ້ໄຂບັນຫາສັງຄົມກົ້ມໜ້ານັ້ນ ຕ້ອງເຮັດເປັນບາດກ້າວໃນຂອບການພົວພັນທີ່ມີລັກສະນະສະເພາະ. ໃນທີ່ສຸດ ແນວຄິດລິເລີ່ມດີໆກໍບັງເກີດຂຶ້ນຢູ່ຮ້ານອາຫານໃຫຍ່ໆຊື່ດັງຈຳນວນໜຶ່ງ ບັນດາເຈົ້າຂອງຮ້ານອາຫານເຫຼົ່ານີ້ເຫັນວ່າຖ້າລູກຄ້າບໍ່ໃຊ້ໂທລະສັບມືຖືເວລາຮ່ວມຮັບປະທານນຳກັນນັ້ນບັນຍາກາດອ້ອມໂຕະອາຫານກໍຈະດີຂຶ້ນ, ອາຫານກໍຈະເພີ່ມລົດຊາດ, ການໂອ້ລົມກັນກໍຈະເປັນໄປແບບໜິດຈິດໜິດໃຈ. ແຕ່ຖ້າລູກຄ້າກິນໄປນຳ ເບິ່ງໜ້າຈໍໄປນຳ ແນ່ນອນກໍຈະເກີດມີດ່ານກີດກັ້ນລະຫວ່າງຜູ້ຮ່ວມໂຕະ ແທນທີ່ຈະເວົ້ານົວຫົວມ່ວນແຕ່ແລ້ວພັດສົນນຳແຕ່ໜ້າຈໍ.ຂ່າວບອກວ່າແນວຄິດ"ຍາມກິນເຂົ້າຂໍໃຫ້ເຊົາໂທ" ນີ້ ໄດ້ເລີ່ມປະຕິບັດໃນເບື້ອງຕົ້ນຢູ່ຮ້ານອາຫານ 8 ແຫ່ງ ເມື່ອປະມານເດືອນ 10 ຜ່ານມາ, ໃນນັ້ນ ມີຮ້ານອາຫານທະເລຄົນຕອມຫຼາຍທີ່ສຸດ ຊື່ວ່າ ແມນຮັດຕັນຟິສ (Manhattan Fish). ໃນຂັ້ນຕົ້ນ, ທາງຮ້ານອາຫານໄດ້ປະກາດຂໍຮ້ອງໃຫ້ລູກຄ້າຢຸດໃຊ້ໂທລະສັບມືຖືເວລາຮັບປະທານອາຫານ ໂດຍຈະມີການມອບເງິນສົມມະນາຄຸນຕໍ່ຜູ້ປະຕິບັດຕາມ. ຢູ່ໂຕະອາຫານຂອງຮ້ານນີ້ ແລະ ບັນດາຮ້ານທີ່ເປັນບໍລິວານນັ້ນ ໄດ້ມີກັບວາງໄວ້ສຳລັບໃຫ້ລູກຄ້າເກັບມ້ຽນໂທລະສັບມືຖື. ຖ້າຢູ່ໂຕະໃດບໍ່ມີການເປີດເອົາໂທລະສັບມືຖືມາໃຊ້ຕະຫຼອດເວລາຮັບປະທານອາຫານ ລູກຄ້າແຕ່ລະຄົນໃນໂຕະນັ້ນ ກໍຈະໄດ້ຮັບບັດຮັບປະທານອາຫານຟຣີ ທີ່ມີມູນຄ່າ 5 ໂດລາສິງກະໂປ.

ຂ່າວກ່ຽວກັບເລື່ອງນີ້ບອກວ່າ ຂະບວນການ "ຍາມກິນເຂົ້າຂໍໃຫ້ເຊົາໂທ" ນີ້ ໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້າເປັນຢ່າງດີ ແລະ ໄດ້ແຜ່ຂະຫຍາຍໄປຢ່າງໄວວາ. ຈາກ 8 ຮ້ານໃນເບື້ອງຕົ້ນ ກາຍເປັນ 13 ຮ້ານໃນຕໍ່ມາ ແລະຕໍ່ໆໄປ.ເສຍດາຍທີ່ບໍ່ມີຂ່າວເພີ່ມຕື່ມກ່ຽວກັບແນວຄິດດີໆນີ້.

ສຳລັບຢູ່ປະເທດລາວພວກເຮົາແລ້ວປະເພນີ "ກິນເຂົ້າຮ່ວມພາ" ແມ່ນມີຄວາມສຳຄັນທີ່ສຸດສຳລັບຫຼໍ່ຫຼອມຄວາມສາມັກຄີຮັກແພງລະຫວ່າງ ພໍ່-ແມ່ ລູກເຕົ້າ. ດັ່ງນັ້ນ, ຈຶ່ງມີຄຳເວົ້າສືບຕໍ່ກັນມາວ່າ ເວລາກິນເຂົ້າຕ້ອງໃຫ້ຄົບໜ້າຄົບຕາກັນມັນຈຶ່ງຊິແຊບ. ແຕ່ໃນຍຸກສັງຄົມກົ້ມໜ້າໃສ່ໜ້າຈໍນີ້, ຄົນນັ່ງອ້ອມພາເຂົ້າ ຫຼື ໂຕະອາຫານ ກໍບໍ່ຄ່ອຍໄດ້ເງີຍເບິ່ງໜ້າກັນປານໃດ. ຄລິບວິດີໂອຊວນຫົວຈຳນວນໜຶ່ງໄດ້ສະແດງໃຫ້ເຫັນຄົນຈ້ຳແຈ່ວຜິດຖ້ວຍ, ຊົດແກງຜິດບ່ວງ, ມີບາງຄົນຫຼິ້ງຊິດແຈ່ວເຜັດໆ, ນ້ຳແກງຮ້ອນໆຈົນໄດ້ໂດດອອກຈາກພາເຂົ້າ, ແຕ່ນັ້ນເປັນເລື່ອງຕະຫຼົກ ສ່ວນຊິໃຫ້ມີການປ່ຽນແປງແທ້ ກໍຕ້ອງມີຂໍ້ລິເລີ່ມທີ່ດີ ເລື່ອງນີ້ສິງກະໂປ ບອກແລ້ວວ່າເຮັດໄດ້.

ທະນາຄານພັດທະນາລາວ
LDB Bank




#ບ່າວກະບື

ຄູ: "ເມດຕາ... ມື້ນີ້ເຈົ້າກໍມາຊ້າອີກຕາມເຄີຍບໍ່. ເປັນຫຍັງເຈົ້າບໍ່ຊື້ໂມງປຸກ?"

ເມດຕາ: "ນ້ອງຊື້ແລ້ວເຮັດແລ້ວ... ແຕ່ມັນມັກຈະງຽບ ເວລານ້ອງກຳລັງນອນຫຼັບຢູ່".

#BAOKBU

Teacher: "You are late again, Medta. Why don't you get an alarm clock?"

Medta: "I did sir, but it keeps silent when I'm asleep. "

ຕາມພາສາ ກາຕູນ



ສາຍເກົ່າສາຍໃໝ່ ສາຍບໍ່ໄດ້ໃຊ້ ລວມກັນຢູ່ເສົາດຽວ

● ໂດຍ : ພູຜາ

ກົມສື່ມວນຊົນ
ຄະນະເລຂາທິການ ສະພາແຫ່ງຊາດ
ຮ່ວມກັບ
ສະຖານີ ໂທລະພາບ
ປ້ອງກັນຄວາມສະຫງົບ (LAO PSTV)
ສະເໜີລາຍການ
"ກົດໝາຍເພື່ອປະຊາຊົນ"
ອອກອາກາດທາງສະຖານີ ໂທລະພາບ
ປ້ອງກັນຄວາມສະຫງົບ (LAO PSTV)
ທຸກໆ ວັນອາທິດ ເວລາ 7:30 - 8:00 ໂມງ
ແລະ ທຸກໆ ວັນພະຫັດ ເວລາ 21:00 - 21:30 ໂມງ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກົກ ບຸດດາໄຊ